# 2006 ບົດສະເໜີ

**ບົດລາຍງານວ່າດ້ວຍເສລີພາບທາງສາດສະໜານາໆຊາດ ປະຈຳປີ 2006**
**ນຳເຜີຍແຜ່ໂດຍຫ້ອງການປະຊາທິປະໄຕ, ສິດທິມະນຸດ ແລະ ແຮງງານ**

## ເປັນຫຍັງຈຶ່ງຕ້ອງກະກຽມແລະຂຽນບົດລາຍງານ

ເຫດຜົນໃນການກະກຽມແລະຂຽນບົດລາຍງານໂດຍກະຊວງຕ່າງປະເທດສະບັບນີ້ ແມ່ນເພື່ອຍື່ນໃຫ້ສະພາ ຄອງແກຣັສ ໂດຍໃຫ້ສອດຄ່ອງກັບ ພາກ102 (b) ຂອງ ກົດໝາຍວ່າດ້ວຍເສລີພາບທາງສາດສະໜານາໆຊາດ (IRFA) ສະບັບ 1998. ກົດໝາຍນີ້ ໄດ້ກຳນົດໄວ້ວ່າ ລັດຖະມົນຕີຕ່າງປະເທດ ໂດຍໄດ້ຮັບການຊ່ວຍເຫຼືອຈາກ ເອກອັກຄະລັດຖະທູດ ສຳລັບວຽກງານດ້ານເສລີພາບ ທາງສາດສະໜານາໆຊາດຈະໄດ້ສົ່ງມອບ "ບົດລາຍງານປະຈຳປີ ໃນບັນຫາເສລີພາບ ທາງສາດສະໜານາໆຊາດ ໂດຍໃນນັ້ນຈະສະໜອງຂໍ້ມູນລະອຽດເພີ້ມເຕີມແລະຫຼ້າສຸດກ່ຽວກັບສິດທິມະນຸດ ຊຶ່ງພົວພັນເຖິງ ເສລີພາບທາງສາດສະໜາໃນສາກົນ."

## ວິທີການກະກຽມຂຽນບົດລາຍງານ

ສະຖານທູດສະຫະລັດຈະທຳການກະກຽມຮ່າງລາຍງານຂັ້ນຕົ້ນ ໂດຍໄດ້ເກັບກຳຂໍ້ມູນຈາກແຫຼ່ງຕ່າງໆ, ລວມທັງຈາກເຈົ້າໜ້າທີ່ ພະນັກງານຂອງລັດຖະບານ ແລະຈາກພາກສ່ວນສາດສະໜາ, ອົງການຈັດຕັ້ງບໍ່ສັງກັດລັດ,ນັກຂ່າວ, ຜູ້ຕິດຕາມເລື່ອງສິດທິມະນຸດ, ແລະ ບັນດາຄູອາຈານສອນ. ວຽກງານເກັບກຳຂໍ້ມູນຂ່າວສານນີ້ ສາມາດກາຍ ເປັນໜ້າວຽກ ທີ່ມີໄພອັຕະລາຍ ແລະ ຫຼາຍໆຄັ້ງທີ່ພະນັກງານສະຖານທູດສະຫະລັດ ຕ້ອງເຮັດວຽກພາຍໃຕ້ສະພາບຫຍຸ້ງຍາກ, ບາງຄັ້ງກໍສ່ຽງໄພ ເພື່ອທຳການສືບຫາຂ່າວເພື່ອຂຽນບົດລາຍງານ ກ່ຽວກັບການລະເມີດສິດທິມະນຸດ, ເພື່ອຕິດຕາມການເລືອກຕັ້ງ ແລະເພື່ອຊ່ວຍຜູ້ຄົນ ຊຶ່ງຕົກຢູ່ໃນໄພອັນຕະລາຍ ອັນເກີດມາຈາກຄວາມເຊື່ອຖື ໃນທາງສາດສະໜາຂອງເຂົາເຈົ້າ.

ຫ້ອງການສາກົນເພື່ອເສລີພາບທາງສາດສະໜາ ແລະໃນການຮ່ວມມືເກັບກຳແລະວິໃຈຂໍ້ມູນສຳລັບຂຽນບົດລາຍງານຂອງບັນດາປະເທດນັ້ນ, ໄດ້ຮັບການສະໜັບສະໜູນ ທາງວິຊາການດ້ານຄວາມຊຳນິຊຳນານ ຈາກບັນດາຫ້ອງການຂອງກະຊວງຕ່າງປະເທດ, ບັນດາອົງການສາດສະໜາ, ອົງການຈັດຕັ້ງບໍ່ສັງກັດລັດອື່ນໆ, ເຈົ້າໜ້າທີ່ຂອງລັດຖະບານຕ່າງປະເທດ, ຕາງໜ້າບັນດາອົງການ

ຈັດຕັ້ງ ແລະສະຖາບັນຂຶ້ນກັບອົງການສະຫະປະຊາຊາດ ແລະອົງການສາກົນ ແລະສາດສະໜາ ຕ່າງໆ ກໍຄືໄດ້ຮັບການສະໜັບສະໜູນຈາກຜູ້ຊ່ຽວຊານ, ຈາກພາກສ່ວນຄູອາຈານສອນ ແລະນັກຂ່າວ. ໃນການເກັບກຳ ແລະເຮັດວຽກບັນນາທິການ ຕໍ່ບົດລາຍງານຈາກປະເທດຕ່າງໆນັ້ນ, ຫ້ອງການ ສາກົນເພື່ອເສລີພາບທາງສາດສະໜາ ໄດ້ປຶກສາຫາລືກັບ ບັນດາຜູ້ຊຳນານງານກ່ຽວກັບບັນຫາການ ບຽດບຽນກັນຍ້ອນການເຊື່ອຖືສາດສະໜາທີ່ແຕກຕ່າງ ແລະໄດ້ປຶກສາກັບຜູ້ນຳ ສາດສະໜາ ທັງຫຼາຍ ກໍຄືຊ່ຽວຊານດ້ານກົດໝາຍ. ຫຼັກການຊີ້ນຳຂອງຫ້ອງການໃນການປະຕິບັດງານນີ້ ແມ່ນຮັບ ປະກັນວ່າໄດ້ມີການເກັບກຳເອົາຂໍ້ມູນ ແລະ ໃນພາວະວິໃສທີ່ກ່ຽວຂ້ອງທັງໝົດຢ່າງຄົບຖ້ວນ ແລະ ຍຸດຕິທຳເທົ່າທີ່ເປັນໄປໄດ້.

ບົດລາຍງານນີ້ ຈະຖືກນຳໃຊ້ຢ່າງກ້ວາງຂວາງ ໂດຍບັນດາກະຊວງ ກໍຄືຫ້ອງການ ສຳນັກງານ ຕ່າງໆໃນປະເທດ ເພື່ອເປັນເຄື່ອງມືສ້າງນະໂຍບາຍ, ດຳເນີນວຽກງານດ້ານການທູດ, ໃຫ້ການຊ່ວຍ ເຫຼືອ, ຝຶກອົບຮົມ ກໍຄືເພື່ອກຳນົດການອະນູມັດຊັບພະຍາກອນຕ່າງໆ. ພ້ອມນັ້ນ ມັນກໍຈະຖືກໝູນ ໃຊ້ເປັນພື້ນຖານ ໃຫ້ແກ່ການກຳນົດວ່າມີປະເທດໃດ ທີ່ທຳການລະເມີດ ຫຼືອະນຸຍາດໃຫ້ມີ "ການລະ ເມີດຢ່າງຮຸນແຮງ".

ບົດລາຍງານນີ້ ກໍຄືໃນກໍລະນີບົດລາຍອື່ນໆອີກ ຂອງກະຊວງຕ່າງປະເທດ ໄດ້ນຳໃຊ້ຮູບແບບການ ຂຽນລາຍງານ ທີ່ອີງຕາມຄູ່ມື ຊິກາໂກ. ຍ້ອນເຫດຜົນນີ້ເອງ, ແບບການຂຽນອັກສອນໂຕໃຫຍ່ [ໃນ ພາສາອັງກິດ] ໂດຍທົ່ວໄປຈະໃຊ້ກັບຊື່ສະເພາະເທົ່ານັ້ນ. ຕົວຢ່າງເຊັ່ນ ໃນຮູບແບບການຂຽນນີ້ ຄຳ ວ່າ "ລັດຖະມົນຕີ ຕ່າງປະເທດ" ຈະບໍ່ຂຽນເປັນໂຕອັກສອນໃຫຍ່, ມີຖ້າແຕ່ຊື່ສະເພາະ "ລັດທະມັນຕີຕ່າງປະເທດ ຄອນໂດລີຊາ ໄຣສ໌ "ຈະຂຽນເປັນໂຕໃຫຍ່. ຍ້ອນແບບວິທີການຂຽນລາຍ ງານນີ້ ຂໍຢ່າໄດ້ເຂົ້າໃຈວ່າເປັນການດູໝິ່ນ ໃນເວລາມີການຂຽນດ້ວຍໂຕອັກສອນນ້ອຍ ເມື່ອເວົ້າ ເຖິງຕຳແໜ່ງ ຂອງບຸກຄົນ ບໍ່ວ່າຈະເປັນຄົນອະເມຣິກາ ຫຼືຕ່າງປະເທດ.

**ການໃຊ້ຄຳສັບໃນບົດລາຍງານ**

ເວລາໃດ ທີ່ຫ້ອງການສາກົນເພື່ອເສລີພາບ ທາງສາດສະໜາ ຂຽນວ່າ ປະເທດໃດປະເທດໜຶ່ງ " ໂດຍທົ່ວໄປແລ້ວໄດ້ນັບຖື " ສິດທິໃນການເຊື່ອຖືທາງສາດສະໜາ ໃນໄລຍະຂອງການຂຽນລາຍ ງານນັ້ນ ກໍໝາຍຄວາມວ່າ ປະເທດດັ່ງກ່າວໄດ້ພະຍາຍາມຫຼາຍທີ່ສຸດ ເພື່ອປົກປ້ອງເສລີພາບ ທາງ ສາດສະໜາ. ດັ່ງນັ້ນ "ໂດຍທົ່ວໄປໄດ້ນັບຖື" ແມ່ນການຈັດອັນດັບທີ່ສູງສຸດ ກ່ຽວກັບການນັບຖື – ເສລີພາບທາງສາດສະໜາ. ໄດ້ໃຊ້ຄຳສັບ "ໂດຍທົ່ວໄປແລ້ວໄດ້ນັບຖື" ໃນລາຍງານນີ້ ກໍຍ້ອນເຫັນ

ວ່າຄວາມພະຍາຍາມປົກປ້ອງ ແລະສົ່ງເສີມໃຫ້ເກີດເສລີພາບທາງສາດສະໜານັ້ນ ບໍ່ແມ່ນສິ່ງຕາຍ ຕົວຢູ່ຄືເກົ່າຕະຫຼອດໄປ; ດັ່ງນັ້ນ ຈຶ່ງເປັນໄປບໍ່ໄດ້ ທີ່ຈະຂຽນຢ່າງແນ່ນອນວ່າ ລັດຖະບານໄດ້ນັບຖື ສິດທິນີ້ຢ່າງເຕັມປ່ຽມ ໃນໄລຍະຂຽນລາຍງານ ເຖິງແມ່ນວ່າເງື່ອນໄຂໄດ້ເອື້ອອຳນວຍມີຫຼາຍທີ່ສຸດກໍ ຕາມ.

**ຄຳຂອບໃຈ**

ບົດລາຍງານ ປີ 2006 ນີ້ ກວມເອົາໄລຍະເວລາລະຫວ່າງ ວັນທີ 1 ກໍລະກົດ 2005 ຫາ 30 ມິຖຸນາ 2006, ແລະສະທ້ອນໃຫ້ເຫັນ ເຖິງຜົນງານຍາດມາໄດ້ ພາຍຫຼັງການເຮັດວຽກແບບທຸ້ມເທ ຂອງ ເຈົ້າໜ້າທີ່ການທູດ ແລະ ພະນັກງານທົ່ວໄປທີ່ກະຊວງຕ່າງປະເທດ ແລະບັນດານັກການທູດປະຈຳຢູ່ ຕ່າງປະເທດຫຼາຍຮ້ອຍຄົນ. ພວກເຮົາຂໍຂອບໃຈ ເຈົ້າໜ້າທີ່ສະຖາທູດ ແລະສະຖານກົງສູນຢູ່ ຕ່າງປະເທດຫຼາຍຄົນ ທີ່ໄດ້ຕິດຕາມ ແລະສົ່ງເສີມໃຫ້ມີເສລີພາບ ທາງສາດສະໜາ, ພ້ອມທັງໄດ້ບັນ ທຶກຢ່າງລະອຽດ ສະພາບກ່ຽວກັບເສລີພາບດ້ານສາດສະໜາ. ເຫັນວ່າບຸກຄົນພາຍໃນ ຫ້ອງການ ສາກົນເພື່ອເສລີພາບດ້າສາດສະໜາ, ນອກຈາກພວກເພິ່ນໄດ້ມີຄວາມພະຍາຍາມຢ່າງໜັກແລ້ວ, ພວກເຮົາກໍຮັບຮູ້ ແລະ ຊົມເຊີຍການເຮັດວຽກຢ່າງທຸ້ມເທ ແບບບໍ່ຮູ້ອິດເມື່ອຍເພື່ອເສລີພາບດ້ານ ສາດສະໜາ ຊຶ່ງຖ້າຂາດເຂົາເຈົ້າແລ້ວ, ການພິມບົດລາຍງານນີ້ກໍຈະເປັນໄປບໍ່ໄດ້, ໃນຈຳນວນ ບຸກຄົນດັ່ງກ່າວນັ້ນກໍມີ Clarissa Adamson, Patricia Aguilo, Philip Barth, Donna Brutkoski, Warren Cofsky, Doug Dearborn, Karen DeBolt, Lisa DeBolt, Sarah Drake, Kenneth Durkin, Maureen Gaffney, Nancy Hewett, Jeremy Howard, Victor Huser, Shellette Jackson, Anthony Jones, Emilie Kao, Patrick Kelly, Stephen Liston, Kathryn Lurie, Mary Maher, Michael Mates, Safia Mohamoud, Joannella Morales, Aaron Pina, and Deborah Schneider. ຜົນງານການປະກອບສ່ວນຂອງບຸກຄົນ ເລົ່ານີ້ ໄດ້ຊ່ວຍໃຫ້ມີຄວາມຄືບໜ້າເພື່ອ ຄວາມມຸ້ງໝາຍເສລີພາບ, ຮັບປະກັນຄວາມແນ່ນອນ ຊັດເຈນໃນລາຍງານຂອງພວກເຮົາ, ແລະໄດ້ນຳມາແຫ່ງ ຄວາມຫວັງໃຫ້ແກ່ຜູ້ຖືກກົດຂີ່ ບໍ່ວ່າຈະ ຢູ່ມຸມໂລກແຫ່ງໃດ.

ອອກເຜີຍແຜ່ໃນເດືອນ ກັນຍາ 2006 ໂດຍ John V. Hanford III, ເອກອັກຄະລັດຖະທູດ ອິດສະຫຼະເພື່ອ ເສລີພາບທາງສາດສະໜານາໆຊາດ

ເຜີຍແຜ່ວັນທີ 15 ກັນຍາ, 2006

## ບົດນຳ 2006

### ບົດລາຍງານວ່າດ້ວຍເສລີພາບທາງສາດສະໜານາໆຊາດ ປະຈຳປີ 2006

### ນຳເຜີຍແຜ່ໂດຍຫ້ອງການປະຊາທິປະໄຕ, ສິດທິມະນຸດ ແລະ ແຮງງານ

ຄວາມເຊື່ອຖືສາດສະໜາ ໃນນາມວ່າເປັນທາງເລືອກສ່ວນບຸກຄົນ ແລະ ພື້ນຖານເສລີພາບນັບ ວ່າເປັນຮາກຖານສຳຄັນ ຂອງບຸກຄະລິກ ນິໄສ ຂອງຊາດອະເມຣິກາ ອັນໄດ້ຝັງເລິກໃນອຸດົມການ ວິໃສທັດຂອງບັນພະບູລຸດຜູ້ສ້າງຕັ້ງ ປະເທດຊາດຂອງພວກເຮົາ. ເສລີພາບໃນການເຊື່ອຖືສາດສະໜາເປັນນຶ່ງໃນເສລີພາບສຳຄັນຍິ່ງຂອງພວກເຮົານັບແຕ່ປະເທດຊາດໄດ້ຖືກສ້າງຕັ້ງຂຶ້ນຈົນເຖິງທຸກວັນນີ້ ແລະ ມັນເປັນການຕັ້ງໃຈ ຂອງຊາວອະເມຣິກາເພື່ອເອົາຊະນະເສລີພາບນັ້ນໃຫ້ໄດ້- ບໍ່ພຽງ ແຕ່ຢູ່ອະເມຣິກາເອງ, ແຕ່ຢູ່ປະເທດອື່ນໆກໍ່ເຊັ່ນດຽວ- ນັ້ນແມ່ນຄວາມຕັ້ງໝັ້ນສະເໝີຕົ້ນສະເໝີປາຍເພື່ອສຳເລັດພາລະກິດ. ລັດຖະມົນຕີຕ່າງປະເທດ ຄອນໂດຣີຊາໄຣສ໌ ໄດ້ເວົ້າວ່າ, “ບໍ່ມີປະເດັນບັນຫາໃດໝົດ ທີ່ຖືເປັນພື້ນຖານ ສຳລັບສະຫະລັດອະເມຣິກາ ຫຼາຍໄປ ກວ່າເສລີພາບດ້ານສາດສະໜາ ແລະ ສະຕິທາງສາດສະໜາ. ປະເທດຊາດເຮົານີ້ ແມ່ນຖືກສ້າງຂຶ້ນ ມາເທິງຮາກເຫງົ້ານັ້ນເອງ, ແລະ ມັນກໍເປັນ ໝາກຫົວໃຈຂອງປະຊາທິປະໄຕ.”

ເສລີພາບທາງສາດສະໜາແມ່ນ “ເສລີພາບອັນດັບນຶ່ງ” ຂອງອະເມຣິກາ ຊຶ່ງໄດ້ເຊີດຊູຈາລຶກໄວ້ ໃນກົດໝາຍລັດຖະທຳມະນູນສະບັບດັດແກ້ຄັ້ງທຳອິດ ຂອງ ລາຍການສະແດງສິດທິແລະເສລີພາບຂອງພົນລະເມືອງ *(First Amendment of the Bill of Rights)*. ໃນທາງດຽວກັນ, ເສລີພາບດ້ານສາດສະໜາກໍແມ່ນພື້ນຖານໃຫ້ແກ່ບັນດາສິດທິມະນຸດໃນໂລກ, ຍ້ອນວ່າມັນກວມເອົາອິດສະລະພາບ ດ້ານ ການປາກເວົ້າ, ການໂຮມຊຸມນຸມ, ແລະ ສະຕິຮູ້ຖືກຮູ້ຜິດ ຊຶ່ງທັງໝົດນັ້ນປະກອບເປັນຖານຂອງການປົກຄອງແບບປະຊາທິປະໄຕ ແລະຄວາມນັບຖືຕໍ່ບຸກຄົນ. ຍ້ອນເຫດຜົນນີ້ເອງ, ການເຕີບໂຕຂອງປະຊາທິປະໄຕດັ່ງເຫັນນຳກັນໃນທຸກວັນນີ້ ຈຶ່ງຜັນປ່ຽນໄປຄວບຄູ່ກັບເສລີພາບທາງສາດສະໜາ ແລະສິດທິມະນຸດອື່ນໆ. ໃນແຕ່ລະປີ *Freedom House* ພິມເຜີຍແຜ່ຄວາມເຫັນລົງມະຕິກ່ຽວກັບປະເທດຕ່າງໆ ໃນໂລກວ່າມີ “ເສລີພາບ”, “ເຄິ່ງເສລີພາບ”, ຫຼື “ຂາດເສລີພາບ” ໂດຍອາໃສປັດໃຈຈຳນວນນຶ່ງ ເປັນຕົວຕັດສິນ, ແລະນຶ່ງໃນປັດໃຈດັ່ງກ່າວທີ່ໄດ້ນຳໃຊ້ແມ່ນເສລີພາບດ້ານສາດສະໜາ. ໃນການລາຍງານປີ ທຳອິດ ໃນປີ 1972, ເຫັນວ່າມີ 44 ປະເທດທີ່ມີ “ເສລີພາບ”, ແຕ່ຕົກມາຮອດປີກາຍນີ້ ຈຳນວນນີ້ໄດ້ ເພີ້ມຂຶ້ນເປັນ 89 ປະເທດ; ໄປໃນທິດກົງກັນຂ້າມ ຂຸມປະເທດທີ່ “ຂາດເສລີພາບ” ໄດ້ຫຼຸດລົງແຕ່ 68ປະເທດ ໃນປີ 1972 ລົງຫາ 45 ປະເທດໃນທຸກວັນນີ້.

ເຖິງປານນັ້ນກໍຕາມ, ໃນຂະນະທີ່ໄດ້ມີຄວາມຄືບໜ້າທົ່ວໂລກໃນເລື່ອງປະຊາທິປະໄຕ ແລະ ການນັບຖື ອິດສະລະພາບພື້ນຖານ, ຍັງມີຫຼາຍລັດຖະບານຢູ່ທີ່ບໍ່ໄດ້ເຮັດຫຍັງຫຼາຍໄປກວ່າເກົ່າ, ບໍ່ໄດ້ປະຕິບັດຕາມ ຄວາມຮັບຜິດຊອບຂອງຕົນ ໃຕ້ຖະແຫຼງການໂລກກ່ຽວກັບສິດທິມະນຸດ ແລະຂໍ້ຕົກລົງສາກົນອື່ນໆ. ຍິ່ງໄປກ່ວານັ້ນຍັງມີຫຼາຍປະເທດຢູ່ ທີ່ລັດຖະບານປະຕິເສດບໍ່ຮັບຮູ້ ແລະບໍ່ປົກ ປ້ອງເສລີພາບທາງສາດ ສະໜາແລະກໍຍັງມີຫຼາຍລັດຖະບານທີ່ຕັ້ງໜ້າຕ້ານສິດທິ ພື້ນຖານນີ້. ຍັງມີປະເທດຈໍານວນນຶ່ງອີກ ໃນທຸກມື້ນີ້ ທີ່ພວກກໍ່ການຮ້າຍສ້າງຄວາມຮຸນແຮງໄດ້ ສວຍໃຊ້ສາດສະໜາ ເພື່ອຮັບໃຊ້ແນວຄິດອຸດົມ ການຂອງເຂົາ ທີ່ຂາດຄວາມອົດທົນບໍ່ຜ່ອນຜັນ ຕໍ່ແນວຄວາມຄິດຂອງຄົນອື່ນ ແລະມີພຽງຄວາມກຽດຊັງ; ເມື່ອເປັນດັ່ງນັ້ນເຂົາໄດ້ຫັນໄປໂຈມຕີ ຕ້ານກັບຜູ້ທີ່ປະຕິບັດຕາມຄວາມເຊື່ອທາງສາດສະໜາ ທີ່ຕ່າງໄປຈາກຕົນ. ຄຽງຄູ່ກັບການທີ່ ພວກເຮົາກໍາລັງພ້ອມກັນຢືນຄຽງຂ້າງ ກັບຜູ້ທີ່ຮຽກຮ້ອງເສລີພາບທາງສາດສະໜາ ຊຶ່ງເປັນເລື່ອງ ຖືກຕ້ອງຢູ່ແລ້ວນັ້ນ, ພວກເຮົາກໍຢືນຢັດ ຕ້ານພວກທີ່ ບໍ່ວ່າຈະເຮັດໃນນາມລັດຖະບານ ຫຼືການຈັດຕັ້ງ ທີ່ໄດ້ສວຍໄຊ້ ຄວາມເຊື່ອຖືທາງສາດສະໜາ ເພື່ອໄປຮັບໃຊ້ຈຸດປະສົງເພື່ອ ຄວາມຮຸນແຮງ, ຂັດຂວາງໜ່ວງໜ່ຽວເສລີພາບຂອງມະນຸດ ແລະປະຊາທິປະໄຕ.

ບົດລາຍງານປະຈໍາປີ ກ່ຽວກັບເສລີພາບທາງສາດສະໜາໃນສາກົນ ແມ່ນໄດ້ຈັດພິມຂຶ້ນ ໃນນາມເປັນ ພາຫະນະສົ່ງເສີມ ແລະປົກປ້ອງສິດທິສາກົນນີ້. ລາຍງານນີ້ພະຍາຍາມຊີ້ໃຫ້ເຫັນ ບາງບ່ອນໃນໂລກ ທີ່ ປະຫັດປະຫານ ຕິດຕາມບຽດບຽນ, ແລະກີດຂວາງຄວາມກ້າວໜ້າ ໃນເລື່ອງນີ້. ໃນກະຕົວຂອງການດໍາເນີນຂະບວນການສ້າງ ບົດລາຍງານນີ້ ຊຶ່ງລວມໃນນັ້ນ ກໍມີທັງວຽກສືບສວນ, ວຽກເກັບກໍາສ້າງເອກະສານ, ແລະການປະທ້ວງກໍລະນີທີ່ມີການລະເມີດ, ທັງໝົດນັ້ນ ສາມາດຊ່ວຍແກ້ໄຂບັນຫາການລະເມີດໄດ້. ການທີ່ຫຼາຍຄົນສືບຕໍ່ ຕໍ່ສູ້ກັບການ ຖືກທຸບຕີ, ທໍລະມານ, ແລະຖືກຄຸມຂັງ, ແມ່ນແຕ່ສູ້ກັບຄວາມຕາຍ ໃນບາງກໍລະນີ, ແລ້ວກໍຍັງ ບໍ່ລະເວັ້ນຄວາມເຊື່ອຂອງຕົນເອງ, ທັງໝົດນີ້ມັນຢັ້ງຢືນເຖິງພະລັງຄວາມເຊື່ອ ແລະສູ້ຊົນໝຽວ ແໜ້ນ ຂອງເຂົາເຈົ້າ.

ບົດລາຍງານປະຈໍາປີກ່ຽວກັບເສລີພາບທາງສາດສະໜາໃນໂລກ ຢັ້ງຢືນເຖິງ ພະລັງດັ່ງກ່າວນີ້, ມັນເປັນປາກສຽງ ໃຫ້ແກ່ຫຼາຍໆລ້ານຄົນ ທີ່ຍັງຄົງສືບຕໍ່ຕົກໃນຄວາມ ທໍລະມານຍ້ອນມີເອກະລັກ ທາງສາດສະໜາ, ຍ້ອນຄວາມເຊື່ອຖື ຫຼື ປະຕິບັດພິທີກໍາທາງສາດສະໜາຂອງເຂົາເຈົ້າ.

ບົດລາຍງານນີ້ ແມ່ນຜົນສືບຕໍ່ມາແບບທໍາມະຊາດ ຂອງປະຫວັດສາດ ຂອງປະເທດຊາດພວກເຮົາ. ຍ້ອນຖືວ່າມັນເປັນສິ່ງປະເສີດ, ພວກເຮົາຈຶ່ງຊຸກຍູ້ ສົ່ງເສີມໃຫ້ຄົນອື່ນ ປົກປ້ອງມັນ ແລະ

ອານຸລັກມັນໄວ້. ປະຫວັດຂອງປະເທດພວກເຮົາ ໃນບັນຫາເສລີພາບທາງດ້ານ ສາດສະໜາ ແລະ ດ້ານສິດທິອື່ນໆ ກໍບໍ່ແມ່ນວ່າມັນຈະດີເລີດ. ເຖິງຢ່າງໃດກໍດີ, ຄວາມຂາດຕົກບົກຜ່ອງ ທີ່ພວກເຮົາ ມີຢູ່ນັ້ນບໍ່ຄວນເປັນຂໍ້ອ້າງໃຫ້ພວກເຮົາຕ້ອງ ຖົດຖອຍຈາກຄວາມທ້າທາຍ ເພື່ອຈະເຮັດໃຫ້ສິດທິ ຈັກກະວານນີ້ ກາຍເປັນຄວາມຈິງ ສຳລັບທຸກໆສະມາຊິກຂອງມວນມະນຸດ.

ໃນນາມເປັນ ເອກອັກຄະລັດຖະທູດ ອິດສະຫຼະ ເພື່ອເສລີພາບທາງສາດສະໜານາໆຊາດ ຊຶ່ງມີຄວາມຮັບຜິດຊອບ ຕໍ່ປະທານາທິບໍດີ ແລະ ລັດຖະມົນຕີກະຊວງຕ່າງປະເທດ ອັນເປັນທີ່ ປຶກສາຕົ້ນຕໍໃນວຽກສົ່ງເສີມຄວາມກ້າວໜ້າໃນເລື່ອງເສລີພາບທາງສາດສະໜາໃນໂລກ, ມັນແມ່ນໜ້າທີ່ຂອງຂ້າພະເຈົ້າ ແລະຂອງຫ້ອງ ການຂ້າພະເຈົ້າ ທີ່ຕ້ອງຢືນຢັດຄຽງຂ້າງກັບຜູ້ ທີ່ສະແຫວງຫາເສລີພາບທາງສາດສະໜາ ແລະສົ່ງເສີມມັນ, ແລະ ຕ້ານກັບຜູ້ທີ່ ພະຍາຍາມປິບຄັ້ນ ເສລີພາບດັ່ງກ່າວ. ພາຍໃຕ້ການຊີ້ນຳຂອງຂ້າພະເຈົ້າ, ຫ້ອງການ ເສລີພາບ ທາງສາດສະໜາ ສາກົນໄດ້ປະຕິບັດຫຼາຍໆ ກິດຈະກຳທີ່ແນໃສ່ ຜັນຂະຫຍາຍນະໂຍບາຍ ສະຫະລັດກ່ຽວກັບ ເສລີພາບດ້ານສາດສະໜາ ໂດຍເຮັດວຽກຢ່າງໃກ້ຊິດກັບເພື່ອນຮ່ວມງານສັງກັດກະຊວງ ຕ່າງປະເທດ ແລະ ບັນດາສະຖານທູດສະຫະລັດ ເພື່ອຈະໄດ້ນຳໃຊ້ ທຸກໆເຄື່ອງມືການທູດຢ່າງຄົບ ຖ້ວນ ສຳລັບປະຕິບັດໜ້າວຽກດັ່ງກ່າວນັ້ນ. ໂດຍຜ່ານການພົບປະເຈລະຈາສອງຝ່າຍ ຢ່າງເປັນທາງການກັບ ລັດຖະບານຕ່າງປະເທດ, ຜ່ານການເຂົ້າຮ່ວມໃນກອງປະຊຸມຫຼາຍຝ່າຍ ເຊັ່ນ ຢູ່ທີ່ອົງການ ສະຫະປະຊາຊາດ ແລະ ອົງການເພື່ອຄວາມປອດໄພ ແລະ ຮ່ວມມືຢູໂຣບ, ຮ່ວມມື ກັບອົງການ ບໍ່ສັງກັດລັດໃນບັນຫາສິດທິມະນຸດ ແລະ ຄວາມເຊື່ອຖື, ແລະ ຜ່ານການ ພົບປະກັບ ຜູ້ຕົກເປັນເຫຍື່ອຂອງການທາລຸນຂົ່ມເຫັງ, ພວກເຮົາໄດ້ພັດທະນາ ບັນດາຍຸດທະສາດ ແລະ ໄດ້ນຳເອົາໄປ ປະຕິບັດເພື່ອແກ້ ໄຂສະພາບ ການເຊັ່ນຂ້າດັ່ງກ່າວຢູ່ແຫ່ງຫົນໃດກໍຕາມ ທີ່ເຫັນວ່າມີ.

ໃນຂະນະດຽວກັນນັ້ນພວກເຮົາກຳນຳສະເໜີຕໍ່ສະພາຄອນແກຣສ ແລະ ຕໍ່ມວນຊົນບົດລາຍງານ ປະ ຈຳປີສະບັບທີແປດກ່ຽວກັບ ເສລີພາບທາງສາດສະໜາ ນາໆຊາດນີ້, ຂ້າພະເຈົ້າຢາກສະແດງ ຄວາມຂອບໃຈມາຍັງ ທ່ານປະທານາທິບໍດີບູສ ແລະ ລັດຖະມົນຕຣີ ກະຊວງປະເທດ ໄຣສ ທີ່ໄດ້ ໃຫ້ການສະໜັບສະໜູນ ຢ່າງແຮງກ້າຕໍ່ວຽກງານນີ້, ພ້ອມດຽວກັນກໍຂໍຂອບໃຈການສະ ໜັບສະໜູນ ມາຈາກທັງສອງພັກທີ່ສະພາ ຄອນແກຣສ ທີ່ມອບໃຫ້ພວກເຮົາ. ພ້ອມດຽວກັນ ພວກເຮົາກໍຮູ້ສຶກ ເປັນບຸນຄຸນຕໍ່ ຫຼາຍໆອົງການຈັດຕັ້ງບໍ່ສັງກັດລັດ ທີ່ໄດ້ສູ້ຊົນໃນນາມເປັນຕົວ ແທນຂອງຜູ້ຖືກກົດຂີ່.

ຂ່າວດີດັ່ງທີ່ເຫັນ ໄດ້ຈາກຕົວເລກຢັ້ງຢືນໂດຍ *Freedom House* ຊີ້ບອກວ່າພວກເຮົາໄດ້ເຫັນ ຄວາມກ້າວໜ້າ. ແຕ່ສິ່ງທີ່ແນ່ນອນມີຢູ່ວ່າ ສິ່ງທ້າທາຍອັນໃຫຍ່ຫຼວງກໍຍັງມີຫຼາຍ. ປະທານາທິບໍດີ

ບູສ ເວົ້າວ່າ “ໃນຂະນະທີ່ສະຫະລັດອາເມຣິກາ ສົ່ງເສີມເປົ້າໝາຍເສລີພາບ, ພວກເຮົາຄວນ ຈືດຈຳວ່າ ເສລີພາບ ບໍ່ແມ່ນຂອງຂັວນຂອງອາເມຣິກາ ມອບໃຫ້ຊາວໂລກ, ແຕ່ຫາກເປັນຂອງຂັວນ ຂອງພະເປັນເຈົ້າມອບໃຫ້ແກ່ເຮົາທັງຍິງ ແລະ ຊາຍໃນໂລກ. ຄວາມຈິງດັ່ງກ່າວ ເຮັດໃຫ້ເຮົາຕ້ອງ ສູ້ຊົນຊ່ວຍເຫຼືອປະຊາຊົນບໍ່ວ່າ ຢູ່ໃສໆໃຫ້ໄດ້ມາແຫ່ງ ເສລີພາບໃນທາງສາດສະໜາ ແລະ ຊ່ວຍສ້າງ ອະນາຄົດທີ່ດີກວ່າເກົ່າ, ຮຸ່ງເຮືອງ ແລະ ມີສັນຕິກວ່າເກົ່າ ສຳລັບທຸກຄົນ.”

ມັນແມ່ນເພື່ອ ຊຸມຊາຍ ແລະ ຍິງ ພ້ອມເດັກນ້ອຍທີ່ກ້າຫານໃນໂລກ ທີ່ໄດ້ຮັບ ຄວາມຍາກແຄ້ນ ທໍລະມານຍ້ອນຄວາມເຊື່ອຖືຂອງເຂົາເຈົ້າ. ພວກເຮົາຂໍອຸທິດ ບົດລາຍງານປະຈຳປີນີ້ ໃຫ້ແກ່ ເຂົາເຈົ້າເລົ່ານີ້. ຂໍຈົ່ງໄດ້ເກີດມາດຕະການໃດນຶ່ງ ເພື່ອສ້າງກຳລັງໃຈ ແລະ ຄວາມຫວັງຂຶ້ນ ຍ້ອນວ່າ ເລື່ອງລາວຂອງເຂົາເຈົ້າບໍ່ໄດ້ຖືກປິດບັງ ແລະ ສະພາບ ຊາຕາກຳ ຂອງເຂົາເຈົ້າບໍ່ໄດ້ຖືກ ຫຼົງລືມ ໂດຍສີ່ທັງຫຼາຍໃນໂລກ.

John V. Hanford III, ເອກອັກຄະລັດຖະທູດ ອິດສະຫຼະເພື່ອເສລີພາບທາງສາດສະໜານາໆຊາດ

ເຜີຍແຜ່ ວັນທີ 15 ກັນຍາ 2006.

**ລາວ**

**ບົດລາຍງານວ່າດ້ວຍເສລີພາບທາງສາດສະໜານານາຊາດ ປະຈຳປີ 2006**

**ນຳເຜີຍແຜ່ ໂດຍຫ້ອງການປະຊາທິປະໄຕ, ສິດທິມະນຸດ ແລະແຮງງານ**

ລັດຖະທຳມະນູນອຳນວຍໃຫ້ມີເສລີພາບດ້ານສາດສະໜາ, ຢ່າງໃດກໍ່ຕາມໃນທາງພາກ ປະຕິບັດ ແລ້ວ ລັດທະບານຍັງຈຳກັດສິດທິດັ່ງກ່າວນັ້ນຢູ່. ເຈົ້າໜ້າທີ່ລັດທະບານບາງຄົນຍັງກະທຳການລະ ເມີດເສລີພາບທາງສາດສະໜາຂອງພົນລະເມືອງ.

ໃນໄລຍະທີ່ເຮັດບົດລາຍງານສະບັບນີ້ຍັງບໍ່ມີການປ່ຽນແປງຫຍັງໃນສະພາທວະຂອງການນັບຖືເສລີ ພາບ ທາງສາດສະໜາ. ພະນັກງານລັດທະບານໄດ້ເຄົາລົບ ສິດທິທີ່ຮັບຮອງດວ້ຍລັດທະທຳມະນູນ ຂອງສະມະຊິກທີ່ເຊື່ອຖືສາສະນາ ທັງໝົດນັ້ນ ແຕ່ຢູ່ພາຍໃນຂໍ້ກຳນົດໂດຍຂອງລັດທະບານ. ເຈົ້າໜ້າທີ່ຢູ່ບາງຂົງເຂດຍັງສືບຕໍ່ບໍ່ຍອມຜ່ອນຜັນໃຫ້ແກ່ການປະຕິບັນສາດສະໜາຂອງຊົນກຸ່ມ ນອ້ຍ ໃນທົ່ວທຸກພາກຂອງປະເທດໂດຍສະເພາະຈາກນິກາຍຄຣິດຕຽນ. ສູນກາງແນວລາວສ້າງຊາດ (LFNC) ແມ່ນອົງການແນວໂຮມມະຫາຊົນຊຶ່ງຕ່າງໜ້າໃຫ້ ພັກປະຊາຊົນ ປະຕິວັດລາວ (LPRP) ຮັບຜິດຊອບການຄວບຄູມເບິ່ງການປະຕິບັດສາດສະໜາ. ດຳລັດຂອງນາຍຍົກລັດທະມົນຕີ ວ່າດວ້ຍການປະຕິບັດສາດສະໜາ (ດຳລັດເລກທີ 92) ເປັນປັດໃຈທາງກົດໝາຍທີ່ສຳຄັນທີ່ກຳນົດ ວິທີທາງປະຕິບັດທາງສາດສະໜາ. ເຖິງແມ່ນວ່າດຳລັດດັ່ງກ່າວໄດ້ມີຄວາມພະຍາຍາມເຮັດໃຫ້ມີ ການຜອ່ນຜັນທາງສາດສະໜາຫລາຍຂື້ນ ນັບຕັ້ງແຕ່ມີການປະກາດນຳໃຊ້ເປັນຕົ້ນມາ ແຕ່ ເຈົ້າໜ້າທີຍັງໄດ້ໃຊ້ຫລາຍໆເງືອນໄຂຂອງດຳລັດ ດັ່ງກ່າວເພື່ອຫ້າມປາມການປະຕິບັດ ທາງ ສາດສະໜາບາງປະການ. ດຳລັດເລກທີ 92 ເປັນບອ່ນອີງໃຫ້ແກ່ບົດບາດຂອງລັດທະບານ ຄືກັບ ເປັນຕົວຕັດສິນຊີ້ຂາດໃນການອະນຸຍາດໃຫ້ມີກິດຈະກຳທາງສາດສະໜາ.

ໃນໄລຍະທີ່ເຮັດບົດລາຍງານສະບັບນີ້ ບັນດາເຈົ້າໜ້າທີ່ທອ້ງຖິ່ນໄດ້ກົດດັນຊາວຄຣິສຕຽນ ກຸ່ມນອ້ຍໃຫ້ປະລະຄວາມເຊື່ອຖືຂອງເຂົ້າເຈົ້າ ໂດຍການຂົ່ມຂູ່ວ່າຈະກັກຕົວ ຫລື ບັບບັງຄັບ ໃຫ້ອອກຈາກໝູ່ບ້ານຂອງເຂົາໄປ. ຄືດັ່ງກໍລະນີທີ່ເກີດຂື້ນຢູ່ແຂວງບໍ່ແກ້ວ, ອຸດົມໄຊ, ແລະ ແຂວງສາລາວັນ. ການກັກຕົວ ແລະ ໜ່ວງໜ່ຽວ ຊາວຄຣິສຕຽນ ແມ່ນມີຢູ່ ແຂວງບໍ່ແກ້ວ, ອຸດົມໄຊ, ສາລາວັນ, ແລະ ກຳແພງນະຄອນວຽງຈັນ. ໃນເດືອນ ທັນວາປີ 2005 ເຈົ້າໜ້າທີ່ ຢູ່ແຂວງບໍລິຄຳໄຊໄດ້ກັກຕົວ ກຸ່ມຊາວມົ້ງ ຊາວເຈັດ ຄົນ. ທັງໝົດໃນກຸ່ມນັ້ນແມ່ນເດັກເຊິ່ງ ມີຄົນໜຶ່ງແມ່ນມາຕັ້ງຖິ່ນຖານຢູ່ແຂວງເພັດຊະບູນໂດຍຖືກໃຫ້ອົບພະຍົກມາແຕ່ທາງພາກເໜືອ ຂອງໄທ, ພວກເຂົາໄດ້ຖືກສົ່ງເຂົ້າປະເທດໂດຍເຈົ້າໜ້າທີ່ໄທ ເຊິ່ງເຈົ້າໜ້າທີ່ເຊື່ອວ່າ ເດັກເຫລົ່ານີ້ ເຂົ້າເມືອງຜິດກົດໝາຍ. ບາງລາຍງານລະບຸວ່າກຸ່ມດັ່ງກ່າວຄືຊາວຄຣິສຕຽນ ແລະ ອາດຈະຖືກ

ກັກຕົວໃນປະເທດ ເພາະການນັບຖືສາດສະໜາດັ່ງກ່າວ. ຊາວເຜົ່າມົ້ງຈຳນວນຊາວເຈັດ ຄົນ ນີ້ຍັງຖືກກັກຕົວຢູ່ໃນໄລຍະຕອນທ້າຍຂອງລາຍງານນີ້. ນອກຈາກນັ້ນ ໂບດ ອີແວັນເຈີລີເກີລ ລາວທີ່ແຂວງບໍ່ແກ້ວກໍ່ຖືກຈູດເຜົາໂດຍເຈົ້າໜ້າທີ່ບ້ານ ພອ້ມທັງກັກຕົວຜູ້ນຳທາງສາດສະໜາ ຫົກຄົນ ໃນທ້າຍປີ 2005. ຫ້າຄົນໄດ້ຖືກປອ່ຍຕົວ ໃນໄລຍະຕໍ່ມາ ແລະ ມີຄົນໜຶ່ງສຽຍຊີວິດຫລັງຈາກຖືກນຳສົ່ງອອກຈາກຄຸກ ໄປທີ່ໂຮງໝໍທະຫານ. ໃນຊວ່ງຕົ້ນປີ 2006 ນາຍບ້ານຄົນໜຶ່ງທີ່ແຂວງອຸດົມໄຊ ໄດ້ຍຶດເອົາທີ່ດິນຂອງຄອບຄົວ ຊາວຄຣິສຕຽນຫລາຍຄອບຄົວ.

ຫຍິ່ງໄປກວ່ານັ້ນ ມີຊາຍຊາວຄຣິສຕຽນຄົນໜຶ່ງທີ່ ແຂວງສາລະວັນ ຖືກກັກບໍລິເວນ ນັບຕັ້ງແຕ່ ວັນທີ 1 ເມສາ, ປີ 2006 ເພາະວ່າລາວໄດ້ປະຕິເສດທີ່ຈະປຽນສາດສະໜາຂອງລາວ. ໃນຕອນ ທ້າຍຂອງໄລຍະເຮັດລາຍງານນີ້ ຍັງຮັບຮູ້ວ່າມີ ສາມສິບຄົນທີ່ເປັນນັກໂທດ ຍ້ອນສາດສະໜາ ແລະ ທັງໝົດກໍ່ແມ່ນ ສະມະຊິກຂອງໂບດ ອີແວັນເຈີລີເກີລ ລາວ, ເຊີ່ງບໍ່ໄດ້ລວມເອົາຊາວມົ້ງ ຈຳນວນ ຊາວເຈັດຄົນທີ່ຂ້າມມາຈາກປະເທດໄທນັ້ນ.

ໂດຍທົ່ວໄປແລ້ວກຸ່ມສາດສະໜາຕ່າງໆແມ່ນມີຄວາມສຳພັນສັນເພື່ອນມິດ ເຖິງວ່າຄວາມແຕກຕ່າງ ໃນການເຊື່ອຖືສາດສະໜາຢູ່ໃນບັນດາຊາວບ້ານນັ້ນຈະພາໃຫ້ເກີດມີຄວາມ ເຄັ່ງຕືງກໍ່ຕາມ, ບາງຄັ້ງຂໍ້ຄັດແຍງແລະຫວ່າງເຜົ່າຕ່າງໆນັ້ນເຮັດໃຫ້ເກີດມີຄວາມເຄັ່ງຕືງກ່ຽວກັບ ການນັບຖື ສາດສະໜາຂຶ້ນຕື່ມອີກ. ຄວາມພະຍາຍາມທີ່ຈະລວມຕົວກັນຂອງກຸ່ມສາດສະໜາ ນິກາຍ ໂພຣແຕັກສຕັນເພື່ອຈະສ້າງໂບດເປັນອິດສະລະຈາກຈາກ LEC ກໍ່ຍັງສືບຕໍ່ສ້າງຄວາມເຄັ່ງຕືງ ພາຍໃນບັນດາປະຊາຄົມຊາວນິກາຍ ໂພຣແຕັກສຕັນ.

ເຈົ້າໜ້າທີ່ ປະຈຳສະຖານທູດສະຫະລັດ ອາເມຣິກາ ແລະ ຄະນະຜູ້ຕາງໜ້າຂອງລັດທະບານ ອາເມຣິກາກໍ່ໄດ້ປຶກສາຫາລືກັບພະນັກງານລັດທະບານລາວ ທຸກລະດັບ ກ່ຽວກັບຄວາມຈຳເປັນ ໃຫ້ມີເສລີພາບທາງສາດສະໜາໃຫ້ຫລາຍຂຶ້ນ. ສະຖານທູດສະຫະລັດ ຍັງຫາທຸກວິທີເພື່ອ ປຸກລະດົມ ໃຫ້ມີການປະນີປະນອມທາງສາດສະໜາດ້ວຍການເຈລະຈາ. ສະຖານທູດ ຍັງ ສືບຕໍ່ໃຫ້ການພົວພັນກັບລະຫວ່າງ ບັນດາ ຜູ້ນຳສາດສະນາ ແລະ ບັນດາແຂກຈາກ ລັດທະບານ ສະຫະລັດທີ່ມາຢຽມຍາມເປັນທາງການຢູ່ເລື້ອຍໆ ລວມທັງຮອງລັດທະມົນຕີ ການຕ່າງປະເທດ ເພື່ອປຸກລະດົມຊຳແລ້ວຊຳອີກເພື່ອໃຫ້ ມີເສລີພາບທາງສາດສະໜາໃນປະເທດໃຫ້ຫລາຍຂຶ້ນ.

**ພາກ 1. ການນັບຖືສາດສະໜາຕ່າງໆຂອງພົນລະເມືອງ**

ປະເທດລາວມີເນື້ອທີ່ທັງໝົດປະມານແປບສິບຫ້າພັນມົນທົນ ແລະ ມີພົນລະເມືອງທັງໝົດປະມານ ຫ້າລ້ານແປດແສນຄົນ. ຊົນເຜົ່າລາວ "ລາວລຸ່ມ" ເກືອບທັງໝົດນັບຖືສາດສະໜາພຸດ ນິກາຍ

ເຖລະວາດ, ເຊິ່ງຊົນເຜົ່າລາວລຸ່ມກວາມເອົາພຽງແຕ່ 40 - 50 ສ່ວນຮ້ອຍຂອງພົນລະເມືອງທັງຫມົດ, ສ່ວນທີ່ເຫລືອແມ່ນກຸ່ມຊົນເຜົ່າອື່ນໆທີ່ແຕກຕ່າງກັນ ແລະ ມີຢ່າງຫນ້ອຍ ສີ່ສິບເຈັດຊົນເຜົ່າ ເຊິ່ງຊົນເຜົ່າກຸ່ມນ້ອຍເຫລົ່ານີ້ ສ່ວນຫລາຍແມ່ນນັບຖືສາດສະຫນາຜີ ແລະ ຄວາມເຊື່ອຖືລະຫວ່າງກຸ່ມຕ່າງໆ ກໍ່ແຕກຕ່າງກັນຫລາຍ. ສາດສະຫນາຜີແມ່ນມີອິດທິພົນ ສ່ວນຫລາຍແມ່ນຢູ່ໃນບາງບັນດາກຸ່ມສີໂນໄທ ເຊັ່ນ: ໄທດຳ, ໄທແດງ ແລະ ເຊັ່ນດຽວກັບໄທມອນຂະແມ ແລະໄທເບີໂມທິເບດ. ແມ່ນແຕ່ບັນດາ ລາວລຸ່ມຜູ້ທີ່ຖືສາດສະຫນາເຄິ່ງພະ ເຄິ່ງຜີທີ່ມີ ການປະຕິບັນປະຕິບັດສາດສະຫນາພຸດນິກາຍ ເຖລະວາດ. ປະມານສອງສ່ວນຮ້ອຍ ຂອງພົນລະເມືອງແມ່ນນັບຖືສາດສະຫນາຄຣິດສຕຽນ ນິກາຍ ຄາໂທລິກ ແລະ ໂພຣແຕັກສຕັນ, ສ່ວນບັນດາສາດສະຫນານ້ອຍອື່ນໆລວ່ມທັງສາດສະຫນາ ບາຮາຍ, ອິດສະລາມ, ສາດສະຫນາພຸດນິກາຍມະຫາຍານ ແລະ ສາດສະຫນາຂົງຈື້ ແລະ ມີ ຈຳນວນນ້ອຍຫລາຍທີ່ບໍ່ຖືສາດສະຫນາຫຍັງຫມົດ.

ສາດສະຫນາພຸດນິກາຍ ເຖລະວາດ ເປັນສາດສະຫນາທີ່ມີການຈັດຕັ້ງທີ່ດີເດັ່ນ ແລະມີຊື່ສຽງຫລາຍທີ່ສຸດຢູ່ໃນລາວເຊິ່ງມີວັດວາອາຮາມເກືອບຫ້າພັນແຫ່ງທີ່ຮັບໃຊ້ເປັນຈຸດລວມຂອງການປະຕິບັດສາດສະຫນາ, ເປັນສະຖານທີ່ເຄົາລົບບູຊາ ກໍຄືກັບສູນກາງວິຖີຊີວິດຂອງຊາວຊົນນະບົດ. ຢູ່ໃນທຸກໆຫມູ່ບ້ານຂອງຊາວລາວລຸ່ມ ປະເພນີທາງສາດສະຫນາແມ່ນຍັງຫມັ້ນຄົງເຂັ້ມແຂງຢູ່ຄືເກົ່າ. ຜູ້ຊາຍຊາວພຸດທັງຫມົດແມ່ນໃຊ້ ເວລາບາງສວ່ນຂອງຊີວິດຕົນເພື່ອບວດເປັນພະສົງ ບຳເພັງສິນຢູ່ໃນວັດເຖິງຈະເປັນເວລາພຽງສັ້ນໆກໍ່ຕາມ. ໃນທົ່ວປະເທດ ມີພະສົງປະມານ 22,000 ອົງ ໃນນັ້ນເກືອບ 9,000 ອົງໄດ້ບັນລຸຂັ້ນ “ພຣະອາຈານ” ເຊິ່ງສະແດງວ່າໄດ້ໃຊ້ເວລາສຶກສາທຳ ແລະ ບຳເພັນກູສິນຢູ່ໃນວັດເປັນເວລາຫລາຍປີ. ນອກຈາກນັ້ນຍັງມີແມ່ຊີປະມານ ສີ່ຮ້ອຍຫ້າສິບຮູບ ເຊິ່ງໂດຍທົ່ວໄປແລ້ວຈະແມ່ນແມ່ຫມ້າຍທີ່ມີອາຍຸຂ້ອນຂ້າງສູງຈຳສິນຢູ່ໃນວັດຕ່າງໆທົ່ວປະເທດ. ວັດສາດສະຫນາພຸດແມ່ນຢູ່ພາຍໃຕ້ການຊີ້ນຳຂອງ ພະສັງຄະລາດ ເຊິ່ງພຳນັກຢູ່ນະຄອນຫລວງວຽງຈັນ ແລະ ກຳກັບຊີ້ນຳກິດຈະກຳຕ່າງໆຂອງ ສຳນັກງານສູນກາງ ເຊີງແມ່ນທໍທຳມະສະພາ.

ເຖິງແມ່ນວ່າ ນິກາຍທຳມະຍຸດຂອງສາດສະຫນາພຸດນັ້ນຖືກລວມເຂົ້າໃນ ໂຮງຮຽນມະຫານິກາຍຢ່າງເປັນທາງການຫລັງຈາກປີ 1975 ເຊິ່ງໂຮງຮຽນມະຫານິກາຍນັ້ນເປັນເປັນໂຮງຮຽນສົງທີ່ ສຳຄັນຂອງສາດສະຫນາພຸດ ແຕ່ນິກາຍທຳມະຍຸດກໍ່ຍັງມີຄົນນັບຖືຢູ່ປະເທດລາວ. ຍັງມີລາຍງານວ່າເຈົ້າໂອວາດ ແລະ ພະສົງຢູ່ຫລາຍວັດໂດຍສະເພາະໃນວຽງຈັນແມ່ນພະທີ່ຮຽນສຳເລັດຈາກໂຮງຮຽນສົງທຳມະຍຸດເຊິ່ງເນັ້ນນັກໃສ່ການນັ່ງສະມະທິ ແລະ ປະຕິບັດສິນຫລາຍກວ່າ.

ຢູ່ວຽງຈັນມີວັດສາສະຫນາພຸດນິກາຍມະຫາຍານຢູ່ 4 ແຫ່ງ ເຊີ່ງ 2 ແຫ່ງແມ່ນສໍາລັບປະຊາຄົມຊາວຫວຽດນາມ ແລະ 2 ແຫ່ງແມ່ນຮັບໃຊ້ປະຊາຄົມຊາວຈີນ. ພະສົງຈາກຫວຽດນາມ, ຈີນ ແລະ ອິນເດຍ ໄດ້ມາຢ້ຽມຢາມວັດເຫລົ່ານີ້ຢ່າງເສລີ ເພື່ອປະກອບພິທີທາງສາດສະຫນາ. ມີວັດມະຫາຍານໃຫຍ່ໆຢ່າງຫນອ້ຍ 4 ແຫ່ງຢູ່ໃນເຂດຕົວເມືອງຕ່າງໆ ແລະ ມີວັດມະຫາຍານ ນອ້ຍໆຫລາຍແຫ່ງຕາມຫມູ່ບ້ານຕ່າງໆໃກ້ໆກັບຊາຍແດນ ຫວຽດນາມ ແລະ ຈີນ.

ມີຜູ້ເຫລື້ອມໃສສັດທາໃນໂບດໂຣມັນ ຄາໂທລິກປະມານ 40,000 ຄົນ ແລະ ສວ່ນຫລາຍກໍ່ແມ່ນຊາວ ຫວຽດນາມເຊີ່ງຢູ່ລວມກັນໃນກາງຕົວເມືອງ ແລະ ເລາະແລບຕາມແມ່ນໍ້າຂອງທາງພາກກາງແລະ ຕອນໄຕ້ຂອງປະເທດ. ໂບດຄາໂທລິກໄດ້ສ້າງຕັ້ງຂື້ນຢູ່ໃນຫ້າເຂດທີ່ມີປະຊາກອນຫນາແຫນ້ນທີ່ສຸດຂອງພາກກາງ ແລະ ພາກໃຕ້ ເຊີ່ງເປັນບອ່ນທີ່ຊາວຄາໂທລິກສາມາດປະຕິບັດການນັບຖື ສາດສະຫນາຂອງເຂົາເຈົ້າໄດ້ ຢ່າງເປີດເຜີຍ. ການເຄືອນໄຫວຂອງໂບດ ສາດສະຫນາ ຄາໂທລິກຍັງຖືກຈໍາກັດຢູ່ທາງພາກເຫນືອ, ເຖີງວ່າຈະມີສັນຍານວ່າລັດທະບານກໍາລັງອະນຸຍາດ ໃຫ້ມີປະຊາຄົມຊາວຄາໂທລິກທີ່ຍັງຫລົງເຫລືອຢູ່ທີ່ນັ້ນ. ມີຄູນພໍ່ 3 ອົງທີ່ພໍານັກຢູ່ວຽງຈັນ, ທ່າແຂກ ແລະ ປາກເຊ ທີ່ສາມາດເດີນທາງໄປ ຢ້ຽມຢາມກຸງໂຣມເພື່ອປຶກສາຫາລືກັບຄະນະເຈົ້າຫນ້າທີ່ໂບດ ຢູ່ທີ່ນັ້ນ. ລັດທະບານບໍ່ອະນຸຍາດໃຫ້ຄູນພໍ່ອົງທີສີ່ໄປປະຕິບັດຫນ້າທີ່ຢູ່ທາງພາກເຫນືອ ຂອງປະເທດ ເພື່ອດໍາລົງຕໍາແຫນ່ງທີ່ຫລວງພະບາງ, ແຕ່ໄດ້ອະນຸຍາດໃຫ້ເດີນທາງໄປພາກໃຕ້ເພື່ອເຂົ້າຮວ່ມພິທີທາງສາດສະຫນາ. ຊັບສີນຂອງໂບດແຫ່ງນັ້ນກໍຖືກຍຶດຫລັງຈາກປີ 1975 ແລະກໍບໍ່ມີ ສະຖານທີ່ພໍານັກຢູ່ໃນເມືອງນັ້ນອີກແລ້ວ, ຄູນພໍ່ຍັງພໍານັກຢູ່ໃນວຽງຈັນ. ສູນຝຶກອົບຮົມແບບບໍ່ ເປັນທາງການແຫ່ງນື່ງຢູ່ທ່າແຂກແມ່ນກໍາລັງກະກຽມການສິດສອນໃຫ້ຜູ້ເຫລື້ມໃສ ສັດທາກຸ່ມນອ້ຍ ນື່ງເພື່ອໃຫ້ເປັນນັກບວດຮັບໃຊ້ປະຊາຄົມຊາວຄາໂທລິກ. ນອກນັ້ນຍັງມີເມຊີຊາວຕ່າງຊາດ ຈໍານວນນື່ງທີ່ມາປະຈໍາຊົວຄາວຢູ່ເຂດປົກຄອງຂອງບາດຫລວງທີ່ວຽງຈັນ.

ມີຜູ້ນັບຖືນິກາຍ ໂພຣແຕັສຕັນປະມານ 300 ກຸ່ມທີ່ສວດມົນ ແລະ ປະກອບພິທີໃນໂບດໃນທົ່ວປະເທດໃຫ້ແກ່ປະຊາຄົມ ຊາວໂພຣແຕັກສຕັນທີ່ເຕີບໃຫຍ່ຂະຫຍາຍຕົວຢ່າງວອ່ງໄວໃນທົດສະວັດທີ່ຜ່ານມາ. ເຈົ້າຫນາທີ່ປະຈໍາໂບດສະເລຍວ່າມີຊາວໂພຣແຕັກສຕັນທັງຫມົດຫລາຍເຖີງ 100,000 ຄົນ, ເຖີງແມ່ນວ່າຈໍານວນຕົວຈີງອາດຈະມີພຽງແຕ່ເຄີ່ງນື່ງກໍ່ເປັນໄດ້. ສູນກາງແນວລາວສ້າງຊາດ ຮັບຮູ້ຊາວໂພຣແຕັກສຕັນສອງກຸ່ມຄື: ກຸ່ມອີແວັນເຈີລີເກີລລາວ (LEC) ເຊີ່ງເປັນຮົມເງົາໃຫ້ ໂບດຊາວໂພຣແຕັກສຕັນ ແລະໂບດເຊເວັນເດ ແອດເວັນທິສທ໌. ສູນກາງແນວລາວສ້າງຊາດຮຽກຮ້ອງໃຫ້ບັນດາກຸ່ມໂພຣແຕັກສຕັນທັງຫມົດດໍາເນີນງານພາຍໃຕ້ການນໍາຂອງ LEC ຍົກເວັ້ນກຸ່ມ

ໂບດເຊເວັນເດ ແອດເວັນທິສທ໌. ຊາວໂພຣແຕັກສຕັນສ່ວນຫລາຍແມ່ນເປັນສະມະຊິກຂອງກຸ່ມຊາວມອນຂະແມ, ໂດຍສະເພາະແມ່ນຊາວຂະມຸ ແລະ ຊາວບຣູຢູ່ສູນກາງແຂວງຕ່າງໆ. ຊາວໂພຣແຕັກສຕັນໄດ້ຂະຫຍາຍຕົວອອກຢ່າງວອ່ງໄວເຊັ່ນດຽວກັນໃນກຸ່ມປະຊາຄົມຊາວມົ້ງ ແລະຢ້າວ. ໂບດໂພຣແຕກສຕັນໄດ້ດຶງດູດຜູ້ເຫລື້ອມໃສ ຢູ່ໃນບັງດາຕົວເມືອງຕ່າງໆເຊີ່ງແມ່ນລາວລູ່ມ. ຊະມະຊິງຊາວ LEC ທັງຫມົດແມ່ນໂຮມກັນຢູ່ນະຄອນຫລວງວຽງຈັນ, ແຂວງວຽງຈັນ, ໄຊຍະບູລີ, ຫລວງພະບາງ, ຊຽງຂວາງ, ບໍລິຄຳໄຊ, ສະຫວັນນະເຂດ, ຈຳປາສັກ, ອັດຕະປື ແລະ ອະດີດເຂດພິເສດ ໄຊສົມບູນ ແລະ ກໍ່ຍັງມີກຸ່ມນອ້ຍໆໂຮມກັນຢູ່ທົ່ວປະເທດ.

ສວ່ນເຊເວັນເດ ແອດເວັນທິສທ໌ ມີຜູ້ເຫລື້ອມໃສບໍ່ເຖິງຫນຶ່ງພັນຄົນຢູ່ໃນຕົວເມືອງວຽງຈັນ ແລະແຂວງບໍ່ແກ້ວ ແລະ ກຸ່ມເຜົ່າມົ້ງ ນອ້ຍໆຢູ່ແຂວງຊຽງຂວາງ.

ຜູ້ທີ່ໄດ້ຮັບອະນຸຍາດໃຫ້ນັບຖືສາດສະຫນາຄຣິດສະຕຽນ ແມ່ນເປັນເຈົ້າຂອງ ສັບສິນ ແລະອາຄານໂບດຢູ່ໃນເມືອງວຽງຈັນ ເຖິງແມ່ນວ່າສັບສິນບາງຢ່າງຂອງພວກເຂົາຍັງນັ້ນບໍ່ຖືກຮັບຮູ້ຈາກລັດທະບານຢ່າງເປັນທາງການ.  ນອກຈາກນັ້ນ ລັດທະບານກໍ່ຍັງສືບຕໍ່ອະນຸຍາດໃຫ້ LEC ສາມາດ ເປັນເຈົ້າຂອງສັບສິນຢູ່ ແຂວງສະຫວັນນະເຂດ ແລະ ປາກເຊ. ແລະ ຍັງມີໂບດແບບບໍ່ເປັນທາງການ ສອງແຫ່ງຢູ່ໃນວຽງຈັນຄື ແຫ່ງນຶ່ງໃຊ້ພາສາອັງກິດ ແລະ ອີກແຫ່ງນຶ່ງໃຊ້ພາສາເກົາຫລີ ເຊີ່ງເປີດບໍ່ລິການໃຫ້ຊາວໂພຣແຕັກສຕັນຕ່າງດ້າວ ທີ່ ຢູ່ວຽງຈັນ.

ມີບາງກຸ່ມທີ່ໂຮມຊຸມນຸມກັນຢູ່ພາຍໃນໂບດ LEC ນັ້ນແມ່ນພະຍະຍາມສະແຫວງຫາຄວາມເປັນເອກະລາດ ແລະ ໄດ້ຕິດຕໍ່ພົວພັນກັບກຸ່ມຊາວໂພຣແຕັກສຕັນໃນຕ່າງປະເທດ. ໃນຂະນະທີ່ໂບດ LEC ມີການເຕີບໃຫຍ່ຂື້ນ ກໍ່ມີຫລາຍທັດສະນະທີ່ແຕກຕ່າງກັນເກີດຂື້ນພາຍ ໃນບັນດາກຸ່ມທີ່ນັບຖືແລະ ບັນດານັກບວດ ແລະ ມີນຶ່ງຫລື ສອງກຸ່ມພະຍະຍາມຈົດທະບຽນເປັນນິກາຍນຶ່ງອີກແບບງຽບໆກັບສູນກາງແນວລາວສ້າງຊາດ. ສອງກຸ່ມໂພຣແຕັກສຕັນ “ໃຕ້ດິນ” ທີ່ມີການປະຕິບັດສາດສະຫນາຢ່າງບໍ່ຢຸດບໍ່ເຊົາ ຄື ນິກາຍ ເມໂທດິສທ ແລະ ຈີໂຮເວີ ວິທເນັດເສດສ, ເຊີ່ງທັງສອງນິກາຍແມ່ນບໍ່ໄດ້ຮັບຜົນສຳເລັດໃນການຂໍອານຸຍາດຈາກພະນັກງານລັດທະບານເພື່ອດຳເນີນກິດຈະກຳ ທາງສາດສະຫນາ.   ເຖິ່ງແມ່ນວ່າດຳລັດຂອງລັດທະບານກຽວກັບການປະຕິບັດ ສາດສະຫນາໄດ້ສ້າງວິທີທາງສຳລັບການຈົດທະບຽນນິກາຍໃຫ່ມໆ ແຕ່ລັດທະບານແມ່ນປາດຖະ ຫນາທີ່ຢາກເຕົ້າໂຮມການປະຕິບັດສາດສະຫນາເພື່ອຈຸດປະສົງໃນການຄວບຄຸມເຊີ່ງມັນກໍ່ເປັນການກີດກັນການຂື້ນທະບຽນໃຫມ່ທີ່ໄດ້ຜົນ. ໃນປີ 2006 ກຸ່ມໂພຣແຕັກສຕັນ ນິກາຍເມໂທດິສທ ໄດ້ຂໍຂື້ນທະບຽນກັບລັດທະບານອີກເທື່ອຫນຶ່ງເພື່ອຂໍເປັນອີກກຸ່ມສາດສະຫນາຫນຶ່ງ ທີ່ແຍກຕົວອອກຈາກໂບດ LEC.

ວິທີທາງໃຫມ່ທີ່ອອກເຜີຍແຜ່ໂດຍ ສູນກາງແນວລາວ ສ້າງຊາດໃນຕົ້ນປີ 2004 ນັ້ນ ຮຽກຮ້ອງໃຫ້ທຸກໆກຸ່ມນິກາຍໂພຣແຕັກສຕັນທີ່ມີຈຸດປະສົງຢາກສ້າງຕັ້ງການໂຮມ ຊູມນູມນັ້ນໂດຍຢູ່ພາຍໃຕ້ການຄູ້ມຄອງຂອງ ໂບດ LEC . ໃນທາງທິດສະດີແລ້ວ ນິກາຍຕ່າງໆທີ່ບໍ່ໄດ້ຂຶ້ນ ທະບຽນກັບສູນກາງແນວລາວສ້າງຊາດນັ້ນແມ່ນບໍ່ອະຍາດໃຫ້ມີການປະຕິບັດສາດສະຫນາທີ່ເຂົານັບຖື ແລະ ບັນດາໂບດທີ່ບໍ່ໄດ້ຈົດທະບຽນນັ້ນກໍ່ໄດ້ສະແດງຄວາມກັງວົນອອກມາເພາະຢ້ານວ່າ ຈະຖືກບັງຄັບໃຫ້ລະງັບ ການປະຕິບັດສາດສະຫນາ. ເຈົ້າຫນ້າທີ່ຢູ່ຫລາຍແຂວງ ກໍ່ບອກຊໍ້າແລ້ວຊໍ້າອີກວ່າໃຫ້ບັນດາໂບດເສລີ ກັບຄືນໄປໂຮມເຂົ້າກັບໂບດ LEC, ແຕ່ຢູ່ຂົງເຂດອື່ນໆເຈົ້າຫນ້າທີ່ ຫາກໄດ້ອະນຸຍາດໃຫ້ບັນດາໂບດເສລີ ປະຕິບັດການບໍລິການໄດ້ໂດຍບໍ່ມີ ຄວາມຫຍຸ້ງຍາກຫຍັງ.

ສະເລຍແລ້ວມີຜູ້ຄົນປະມານ 400 ນັບຖືສາດສະຫນາອິດສະລາມຢູ່ໃນ ປະເທດລາວ. ເຊິ່ງຜູ້ຄົນເຫລົ່ານີ້ສ່ວນໃຫຍ່ແລ້ວແມ່ນຊາວຕ່າງຊາດ ຜູ້ທີ່ມີເຊື້ອສາຍມາຈາກອາຊີໃຕ້ ຫລື ກຳປູເຈຍ (ເຜົ່າຈາມ) ທີ່ໄດ້ຮັບອະນຸຍາດໃຫ້ດຳລົງຊີວິດຢູ່ລາວໄດ້ຢ່າງຖາວອນ. ຢູ່ນະຄອນຫລວງວຽງຈັນມີມັດສະຢິບສອງແຫ່ງທີ່ ໃຫ້ການບໍລິການຢ່າງບໍ່ຢຸດບໍ່ເຊົາແກ່ ຜູ້ຄົນທີ່ນັບຖືສາດສະນາອິດສະລາມນິກາຍ ຊຸນນີ ແຕ່ມັດສະຢິບທັງສອງແຫ່ງເປີດໃຫ້ບໍລິການແກ່ຊາວນິກາຍຊີເອັດເຊັ່ນກັນ.

ມີຜູ້ເຫລື້ມໃສ ແລະ ສັດທາສາດສະຫນາບາຮາຍປະມານ ແປດພັນຄົນ ແລະ ມີສູນກາງຢູ່ ສີ່ແຫ່ງຄື: ຢູ່ກຳແພງນະຄອນຫລວງວຽງຈັນ ສອງແຫ່ງ, ແຂວງວຽງຈັນຫນຶ່ງແຫ່ງ ແລະ ອີກນຶ່ງແຫ່ງຢູ່ ສະຫວັນນະເຂດ, ຍັງມີຜູ້ທີ່ນັບຖືສາດສະຫນາບາຮາຍກຸ່ມນ້ອຍໆ ຢູ່ ແຂວງຄຳມວນ ແລະ ເມືອງປາກເຊ. ທີ່ດິນທີ່ສູນກາງ ທັງສີ່ແຫ່ງຕັ້ງຢູ່ ເພື່ອຮັບໃຊ້ຊາວບາຮາຍ ນັ້ນແມ່ນໄດ້ຮັບອະນຸຍາດຈາກລັດທະບານໃນປີນີ້. ນອກນັ້ນ ລັດທະບານຍັງອະນຸຍາດໃຫ້ຊາວບາຮາຍນຳໃຊ້ທີ່ດິນທີ່ເຂົ້າໄດ້ນຳໃຊ້ແລ້ວນັ້ນເປັນປ່າຊ້າ.

ຊາວບາຮາຍກຳລັງວາແຜນທີ່ຈະສ້າງສູນນັ່ງສະມາທິແຫ່ງໃຫມ່ທີ່ບ້ານດົງບັງ, ແຂວງ ສະຫວັນນະເຂດ ແລະ ບ້ານລາດຄວາຍທີ່ກຳແພງນະຄອນ ເຊິ່ງພວກເຂົາໄດ້ຮັບອະນຸຍາດເພື່ອນຳໃຊ້ທີ່ດິນທັງຢູ່ຂັ້ນບ້ານ ແລະ ຂັ້ນເມືອງ, ພຽງແຕ່ກຳລັງລໍຖ້າໃບຕາດິນເປັນທາງການຈາກຫ້ອງການທີ່ດິນຂອງເມືອງ. ຍັງມີຜູ້ຄົນທີ່ ນັບຖືສາດສະຫນາຊິງຈີ້ ແລະ ເຫລົ່າຈື້ກຸ່ມນ້ອຍໆທີ່ປະຕິບັດສາດສະຫນາຂອງເຂົ້າຢູ່ບັນດາຕົວ ເມືອງໃຫຍ່ໆ

**ພາກ 2. ສະຖານະຂອງເສລີພາບໃນການນັບຖືສາດສະຫນາ**

*ໂຄງຮ່າງກົດຫມາຍ/ນະໂຍບາຍ*

ລັດທະທຳມະນູດອຳນວຍໃຫ້ມີເສລີພາບດ້ານສາດສະຫນາ ແຕ່ເຖີງຢ່າງໃດກໍ່ຕາມ ເຈົ້າຫນ້າທີ່ ໂດຍສະເພາະຢູ່ຂັ້ນທ້ອງຖິ່ນ ບາງຄັ້ງກໍ່ລະເມີດສຳທິດັ່ງກ່າວນີ້ຢູ່. ມາດຕາທີ 30 ຂອງລັດທະທຳມະນູດແມ່ນໃຫ້ສິດເສລີພາບດ້ານສາດສະຫນາ, ເຊີ່ງຄວາມຈີງແລ້ວແມ່ນຂໍ້ອ້າງຈາກ ລັດທະບານໃນການປະນີປະນອມທາງດ້ານສາດສະຫນາ. ຢ່າງໄດກໍ່ຕາມ ມາດຕາ 9 ຂອງລັດທະທຳມະນູດຊຸກຍູ້ ໃຫ້ມີການຫລີກເວັ້ນທຸກການກະທຳທີ່ກໍ່ໃຫ້ເກີດມີຄວາມຄວາມແບງແຍກລະຫວ່າງສາດສະຫນາ ແລະ ບັນດາບຸກຄົນ. ລັດທະບານຕີຄວາມຫມາຍລັດທະທຳມະນູນ ແບບຈຳກັດຫລາຍ ແລະກໍ່ເປັນຂໍ້ອ້າງໃນການຈຳກັດການປະຕິບັດດ້ານສາດສະຫນາ ໂດຍສະເພາະກັບສາດສະຫນານ້ອຍໆ. ເຖີງແມ່ນວ່າຈະມີການປະກາດ ຍອມຮັບການມີຢູ່ຂອງ ສາດສະຫນາຕ່າງໆທີ່ແຕກຕ່າງກັນ ຢ່າງເປັນທາງການ ແຕ່ມັນກໍ່ເນັ້ນໃສ່ການບົ່ມຊອ້ນໃຫ້ມີການແບງແຍກ, ຫັນເທ ແລະ ທຳລາຍ ສະເຖຍ ລະພາບ.   ເຈົ້າໜ້າທີ່ລະດັບທ້ອງຖິ່ນຫລາຍຄົນ ຕະຫລອດຮອດ ເຈົ້າໜ້າທີ່ສູນກາງ ລັດຖະບານ ຢູ່ໃນຫລາຍລະດັບ ໄດ້ພາກັນຕີຄວາມໝາຍ ຂອງມາດຕາທີ່ 9 ເພື່ອເປັນເຫດຜົນ ອ້າງອີງໃນການ ຫ້າມເຜີຍແຜ່ສາດສະໜາ ເພື່ອບໍ່ໃຫ້ຫັນປ່ຽນສາດສະໜາ.

ບຸກຄົນທີ່ຖືກຈັບ ຫລື ຖືກຕັດສີນ ວ່າມີຄວາມຜິດໃນຂໍ້ຫາກະທຳຜິດ ທາງສາດສະໜານັ້ນ ແມ່ນໄດ້ຮັບ ການປົກປ້ອງຄຸ້ມຄອງພາຍໄຕ້ກົດຫມາຍຫນ້ອຍທີ່ສຸດ. ພວກທີ່ຖືກກັກຕົວໄວ້ນັ້ນ ອາດຈະຖືກຈອງຈຳເປັນເວລາດົນນານໂດຍບໍ່ມີການສືບສວນຄະດີ. ຫົວໜ້າສານ ຫລືຜູ້ພິພາກສາ ບໍ່ແມ່ນຄະນະລູກຂຸນເປັນຜູ້ຕັດສິນຄວາມຜິດ ຫລື ຄວາມບໍລິສຸດຂອງຈຳເລີຍ ໃນຄະດີຕ່າງໆຢູ່ສານ ແລະສິດທິໃນການຕໍ່ສູ້ຄະດີຂອງ ຜູ້ຖືກກ່າວຫາກໍມີຢ່າງຈຳກັດ. ກຸ່ມສາດສະໜາຕ່າງໆທັງໝົດລວມທັງບັນດາຜູ້ຄົນນັບຖືສາດສະໜາພຸດ ແມ່ນປະຕິບັດສາດສະໜາຂອງເຂົາເຈົ້າ ໃນສະພາບທີ່ເຈົ້າໜ້າທີ່ນຳໄຊ້ ກົດໝາຍຕາມອາລົມ ຫລື ຕາມລຳພັງໃຈ ແບບບໍ່ມີກົດເກນ. ການກະທຳບາງຢ່າງທີ່ເຈົ້າໜ້າທີ່ ຕີຄວາມໝາຍວ່າເປັນໄພຂົ່ມຂູ່ ນັ້ນອາດໄດ້ຮັບໂທດຢ່າງຮຸນແຮງ.
ການປະຕິບັດສາດສະໜາ ສາມາດກະທຳໄດ້ຢ່າງ “ ເສລີ “ ກໍຕໍ່ເມື່ອເຂົ້າໃຈເອງວ່າ ຜູ້ປະຕິບັດຢູ່ພາຍໃນຂອບເຂດຂອງລະບຽບ ຫລັກການຊີ້ນຳທີ່ລັດຖະບານ ວາງອອກ.

ໂດຍປົກກະຕິແລ້ວ ລັດທະບານລາວແມ່ນຈະບໍ່ຮັບຮູ້ທຸກໆການກະທຳທີ່ບໍ່ຖືກຕ້ອງຕາມທາງການວ່າງອອກ ເຖີງແມ່ນວ່າຈະຢູ່ໃນກໍລະນີທີ່ຖືກ ບຽດບຽນກັນຍ້ອນການເຊື່ອຖືສາດສະຫນາທີ່ແຕກຕ່າງກັນກໍ່ຕາມ. ຄວາມຮັບພິດຊອບມັກຈະຕົກ ເປັນຂອງຜູ້ເຄາະຮ້າຍຢ່າງຫລີກລ້ຽງບໍ່ໄດ້ເຖີງແມ່ນວ່າເຈົ້າຫນ້າທີເອງຈະເປັນຜູ້ກະທຳພິດກໍ່ຕາມ. ບາງກໍລະນີ ເຈົ້າຫນ້າທີ່ກໍ່ປັ້ນເລື້ອງຂື້ນມາອະທິບາຍຢ່າງບໍ່ຫນ້າເຊື່ອ ເພື່ອປົກປອ້ງບັນດາ ເຈົ້າຫນ້າທີ່ນຳກັນ.

ຢູ່ໃນບັນດາ 20 ມາດຕາ ຂອງ ດຳລັດເລກທີ 92 ນັ້ນໄດ້ສ້າງຫລັກການຊີ້ນຳ ສຳຫລັບການເຄື່ອນໄຫວທາງສາດສະໜາໃນຂົງເຂດກ້ວາງຂວາງ. ໃນຂະນະທີ່ດຳລັດສະບັບນີ້ ກຳນົດໃວ້ວ່າ ລັດຖະບານ " ເຄົາລົບນັບຖື ແລະ ປົກປ້ອງຄຸ້ມຄອງການເຄື່ອນໄຫວອັນຖືກຕ້ອງຕາມ ກົດໝາຍຂອງບັນດາຜູ້ຄົນນັບຖືສາດສະໜາ" ມັນກໍຍັງພະຍາຍາມເຮັດໄຫ້ເຊື່ອໝັ້ນວ່າ ການປະຕິບັດສາດສະໜາ ນັ້ນ "ຖືກຕ້ອງສອດຄ່ອງກັບກົດໝາຍ ແລະ ກົດລະບຽບຕ່າງໆຂອງປະເທດ "  ດຳລັດເລກທີ 92 ໄດ້ສະຫງວນ " ສິດທິ , ໜ້າທີ່ໃນການບໍລິຫານຄຸ້ມຄອງ ແລະ ສົ່ງເສີມ " ໃນການປະຕິບັດ ສາສະໜາ ສຳລັບສູນກາງແນວລາວຮັກຊາດໂດຍການຮຽກຮ້ອງໃຫ້ເກືອບທຸກທິດທາງໃນການ ປະຕິບັດສາດສະຫນາຕ້ອງໄດ້ຮັບອະນຸຍາດຈາກຫ້ອງການສູນກາງແນວລາວສ້າງຊາດທີ່ຮັບຜິດ ຊອບຕໍ່ບັນດາບ້ານ ຫລື ເມືອງຕ່າງໆທີ່ມີການເຄືອນໄຫວດ້ານສາດສະຫນາ.

ເຖີງແມ່ນວ່າ ກົດລະບຽບທີ່ວາງອອກນັ້ນ ໃຫ້ສິດເຄື່ອນໄຫວຫລາຍຢ່າງຖືກຕ້ອງ ຕາມກົດໝາຍ ຊຶ່ງແຕ່ກ່ອນເຄີຍຖືວ່າ ເປັນການກະທຳທີ່ຜິດກົດໝາຍເຊັ່ນ: ການເຜີຍແຜ່ ສາດສະໜາ ເພື່ອຊັກຊວນໃຫ້ປ່ຽນສາດສະໜາ, ການຈັດພິມເອກະສານກ່ຽວກັບສາດສະໜາ ແລະ ການສືບຕໍ່ພົວພັນກັບກຸ່ມສາດສະໜາອື່ນໆ ທີ່ຢູ່ຕ່າງປະເທດນັ້ນກໍ່ຕາມ, ແຕ່ໃນທາງພາກປະຕິບັດແລ້ວ ການເຄື່ອນໄຫວຕ່າງໆນັ້ນ ຈະຕ້ອງໄດ້ຮັບການອະນຸຍາດຈາກສູນກາງແນວລາວສ້າງຊາດ ກ່ອນຊຶ່ງກໍເທົ່າກັບອຳນວຍໃຫ້ລັດຖະບານມີເຄື່ອງມືສຳຫລັບນຳໃຊ້ຂໍ້ຈຳກັດກາຫັດແຄບ ຕໍ່ການປະຕິບັດສາດສະໜາ. ລັດທະບານ ໄດ້ຮຽກຮ້ອງໃຫ້ຫລາຍກຸ່ມສາດສະຫນາໃຫ້ລາຍງານຕໍ່ກົມວຽກງານສາດສະຫນາເປັນໄລຍະໆ ເຊິ່ງກໍປາກົດວ່າໄດ້ຍົກເວັ້ນສາດສະຫນາພຸດ. ອີງຕາມຫົວຫນ້າກຸ່ມສາດສະຫນາບາງຄົນໄດ້ກ່າວວ່າ ລັດທະບານໄດ້ຮຽກຮ້ອງໃຫ້ລາຍງານເປັນປະຈຳກົ່ວເກົ່າຈາກປະຈຳປີມາເປັນປະຈຳທຸກໆຫົກເດືອນ ແລະ ປະຈຸບັນ ແມ່ນຮຽກຮ້ອງໃຫ້ລາຍງານຫລັງຈາກສີ່ເດືອນ. ຍັງມີການຈຳກັດການຈັດພິມເອກະສານກ່ຽວກັບສາດສະໜາຂອງທຸກໆສາດສະຫນາ ເຊີ່ງກໍ່ຍົກເວັ້ນສາດສະຫນາພຸດ.

ທັງລັດຖະທຳມະນູນ ແລະ ດຳລັດເລກທີ 92 ຖືເອົາທັດສະນະທີ່ວ່າການປະຕິບັດສາດສະໜານັ້ນຈະຕ້ອງຮັບໃຊ້ຜົນປະໂຫຍດຂອງຊາດ ໂດຍສົ່ງເສີມການພັດທະນາ, ການສຶກສາ ແລະ ສອນໃຫ້ບັນດາຜູ້ເຊື່ອຖືນັ້ນ ເປັນພົນລະເມືອງທີ່ດີຂອງຊາດ. ລັດຖະບານຖືວ່າເປັນສິດທິ ແລະ ໜ້າທີ່ຂອງຕົນທີ່ຈະຕ້ອງຄວບຄຸດູແລ ການປະຕິບັດສາດສະໜາ ໃນທຸກລະດັບເພື່ອຮັບປະກັນໃຫ້ສາດສະໜານັ້ນຮັບໃຊ້ບົດບາດທີ່ວ່ານີ້ໃນສັງຄົມ. ໃນຕົວຈິງແລ້ວການເຊື່ອຖືດັ່ງກ່າວໄດ້ສົ່ງຜົນໃຫ້ລັດຖະບານເຂົ້າແຊກແຊງຢູ່ເລື້ອງໆ ຕໍ່ການເຄື່ອນໄຫວ ຫລື ກິດຈະກຳຕ່າງໆຂອງບັນດາຜູ້ຄົນກຸ່ມນັບຖືສາດສະໜາ ນ້ອຍໆ ໂດຍສະເພາະຊາວຄຣິສຕຽນ ຊຶ່ງບັນດາເຈົ້າໜ້າທີ່ມີຄວາມຮູ້ສຶກວ່າ

ການປະຕິບັດ ສາດສະໜາຂອງເຂົາເຈົ້ານັ້ນ ບໍ່ໄດ້ສົ່ງເສີມ ຜົນປະໂຫຍດຂອງຊາດແຕ່ປະການໃດ ຫລື ບໍ່, ເຈົ້າໜ້າທີ່ກໍເຫັນວ່າ ການເຄື່ອນໄຫວຕ່າງໆຂອງເຂົາເຈົ້າ ເປັນການສະແດງອອກ ເຖິງຄວາມບໍ່ຈິງຮັກພັກດີຕໍ່ລັດຖະບານ.

ເຖິງແມ່ນລັດຈະມີທັດສະນະທາງໂລກ ທັງໃນນາມ ແລະ ໃນພາກປະຕິບັດກໍ່ຕາມ ແຕ່ ວ່າບັນດາສະມາຊິກຂອງສະຖາບັນຕ່າງໆຂອງລັດທະບານກໍ່ໃຫ້ຄວາມເອົາໃຈໃສ່ຢ່າງໃກ້ຊິດແກ່ສາດສະໜາພຸດນິກາຍເຖລະວາດ ອັນເປັນສາດສະໜາທີ່ປະຊາຊົນລາວສ່ວນໃຫຍ່ນັບຖື. ການຍົກເວັ້ນຂໍ້ຈຳກັດຫລາຍໆຂໍ້ໃຫ້ສາດສະຫນາພຸດຂອງລັດທະບານຢູ່ໃນດຳລັດເລກທີ 92 ນັ້ນ ກໍ່ເປັນການກຳນົດຕໍ່ອົງການສາດສະຫນາອື່ນໆ ແລະ ທັງເປັນການສົ່ງເສີມຂອງລັດທະບານເຮັດໃຫ້ ສາດສະໜາພຸດເປັນພາກສ່ວນນຶ່ງ ທີ່ຈຳເປັນຂອງວັດທະນະທຳລາວ ແລະຮັບຮູ້ໂດຍຈົນຍາບັນວ່າສາດສະໜາພຸດນິກາຍເຖລະວາດເປັນສາດນະຫນາປະຈຳຊາດແບບບໍ່ເປັນທາງການ. ທັງເປັນການສົ່ງການສັງເກດການຂອງ ລັດຖະບານ, ການຄວບຄຸມຄະນະສົງ, ການສະໜັບສະໜູນດ້ານການເຝິກອົບຮົມ ແລະ ການດູແລ ກຳກັບເບິ່ງ ນຳວັດວາ ແລະ ສະຖານທີ່ອື່ນໆຂອງວັດ ໂດຍລັດຖະບານນັ້ນ ກໍເປັນສ່ວນປະກອບ ທີ່ສະແດງ ອອກໃນຮູບແບບນຶ່ງ ເຖິງຄວາມນິຍົມຊົມຊອບ ແລະ ເຫັນດີນຳສາດສະໜານີ້ ຊຶ່ງໃນ ຄວາມເປັນຈິງແລ້ວ ກໍເທົ່າກັບເປັນການ ເຮັດໃຫ້ສາດສະໜາພຸດເປັນພາກສ່ວນນຶ່ງທີ່ຈຳເປັນຂອງ ວັດທະນະ ທຳແຫ່ງຊາດ ແລະເປັນແນວທາງແຫ່ງຊີວິດ. ມີຜູ້ຄົນຈຳນວນຫລວງຫລາຍໄດ້ຖືເອົາສະໜາພຸດເປັນທັງວັດທະນະທຳແຫ່ງຊາດ ແລະເປັນແນວທາງແຫ່ງຊີວິດ. ການລວມເອົາວິທີທາງສາດສະໜາພຸດ ເຂົ້າໃນພິທີ ການຕ່າງໆຂອງລັດຫລາຍຂຶ້ນເລື້ອງໆນັ້ນ ສະທ້ອນໃຫ້ເຫັນເຖິງ ຖານະຂອງສາດສະໜາພຸດທີ່ ຖືກຍົກສູງຂຶ້ນໃນສັງຄົມຢູ່ໃນບາງຂົງເຂດ ທີ່ມີການນັບຖືສາດສະຫນາຜີພາຍໃນຊົນເຜົ່າກຸ່ມນອ້ຍນັ້ນ ເຈົ້າຫນ້າທີ່ຢູ່ທ້ອງຖິ່ນນັ້ນ ໄດ້ພະຍະຍາມ ຊັກຊວນບັງດາກຸ່ມນັ້ນ ຢ່າງເອົາຈິງເອົາຈັງເພື່ອໃຫ້ມານັບຖືສາດສະຫນາພຸດ ແລະປະລະເບື້ອງຫລັງ ທີ່ເຂົາເຄີຍເຊື່ອຖືສິ່ງເວດມົນ ແລະຈິດວິນຍານ. ລັດຖະບານໄດ້ໂນ້ມນ້າວບໍ່ໃຫ້ປະຕິບັດການ ເຊື່ອຖືຜີ ຊຶ່ງຖື ວ່າເປັນສິ່ງລ້າສະໃຫມ, ເປັນໄພຕໍ່ສຸຂະພາບ ຫລື ຜິດກົດໝາຍເຊັ່ນ: ການປະຕິບັດ ຕາມປະເພນີຂອງບາງຊົນເຜົ່າທີ່ມີການຂ້າເດັກທາຣົກ ຊຶ່ງເກີດມາແບບບໍ່ສົມປະກອບ ຫລື ປະເພນີໃນການ ເກັບຮັກສາສົບຂອງຍາດພີ່ນ້ອງທີ່ຕາຍແລ້ວນັ້ນ ໄວ້ຢູ່ໃນບ້ານເຮືອນ. ທິດທາງ ຂອງການເຊື່ອຖືທີ່ບໍ່ຖືກຕາມປະເພນີນັ້ນໄດ້ແຊກແຊງເຂົ້າໄປໃນກຸ່ມຊາວໂພຣແຕັກສຕັນຢູ່ໃນບາງ ຂົງເຂດ. ຢູ່ແຂວງຊຽງຂວາງກຸ່ມຊາວຄຣິດຕຽນຊົນເຜົ່າມົ້ງໄດ້ນຳເອົາການປະຕິບັດສາດສະຫນາແບບອະພິນິຫານເຂົ້າມານຳໃຊ້ບໍລິການຢູ່ໂບດ. ອີງຕາມເຈົ້າຫນ້າທີ່ຢູ່ແຂວງດັ່ງກ່າວຊີ້ແຈງວ່າຍ້ອນມີການນັບຖືເຫລົ່ານີ້ຈຶ່ງເຮັດໃຫ້ ສະມະຊິກອະວຸໂສຂອງໂບດໄດ້ຂ້າພັນລະຍາຕົນເອງຕາຍໃນຊ່ວງທ້າຍປີ 2003 ເພາະເຊື່ອວ່າຈະສາມາດເຮັດໃຫ້ນາງ ຄືນຊີບພາຍໃນ 3 ວັນ. ເຈົ້າຫນ້າທີ່

ຈາກສູນກາງແນວລາວສ້າງຊາດຈຶ່ງໄດ້ຂໍໃຫ້ໂບດເຊເວັນເດ ເອັດເວີທີສທລວມເອົາກຸ່ມຊາວມົງກຸ່ມນີ້ເຂົ້າໃນປະຊາຄົມຂອງເຂົາເພື່ອນຳເອົາຫລັກຄຳສອນຂອງ ເຂົາເຂົ້າໃນຖັນແຖວນິກາຍທີ່ໄດ້ຮັບອະນຸຍາດ.

ເຖິງແມ່ນລັດຖະບານຈະບໍ່ສືບຕໍ່ສາຍພົວພັນ ທາງການທູດກັບ" ວາຕິກັງ" ກໍຕາມ, ແຕ່ສັນຕະປາປາປະຈຳຢູ່ປະເທດໄທ ກໍໄປຢ້ຽມຢາມ ແລະໄດ້ຕິດຕໍ່ປະສານງານກັບລັດຖະບານ ກ່ຽວກັບໂຄງການຊ່ວຍເຫລືອຕ່າງໆ ພິເສດກໍແມ່ນໂຄງການຊ່ວຍເຫລືອ ຜູ້ຄົນທີ່ເປັນພະຍາດຂີ້ທູດ ແລະ ຄົນພິການ.

ຜູ້ທີ່ນັບຖືສາດສະໜາ ອິດສະລາມຢູ່ໃນປະຊາຄົມສາດສະໜາອິດສະລາມນ້ອຍໆສາມາດປະຕິບັດສາດສະໜາຂອງເຂົາເຈົ້າໄດ້ຢ່າງເປີດເຜີຍ ໂດຍສາມາດໄປມັດສະຍິບສອງແຫ່ງ ທີ່ເຄື່ອນໄຫວຢ່າງຫ້າວຫັນ ນັ້ນໄດ້ຢ່າງເສລີ. ພິທີສວດມົນພາວະນາປະຈຳວັນ ແລະ ພິທີສວດມົນພາວະນາ " ຈຸມມາອັດ " ປະຈຳວັນສຸກ ຂອງທຸກໆອາທິດນັ້ນ ກໍສາມາດຈັດຂຶ້ນໄດ້ໂດຍ ບໍ່ໄດ້ຖືກຂັດຂວາງຈາກທາງການ ແຕ່ຢ່າງໃດ ແລະ ການສະເຫລີມສະຫລອງ ທຸກຢ່າງຕາມສາດສະໜາອິສລາມ ກໍໄດ້ຮັບການອະນຸຍາດ. ບັນດາພົນລະເມືອງທີ່ເປັນຊາວມຸສະລິມ ສາມາດເດີນທາງໄປນະມັດສະການຢູ່ສະຖານທີ່ສັກສິດຂອງສາດສະໜາອິສລາມ ໃນລະຫວ່າງເທດສະການ ສະແຫວງບຸນ " ຮາຈ " ນັ້ນໃດ. ພວກກຸ່ມເຜີຍແຜ່ຄຳສັ່ງສອນຕາໄບລໃຫ້ແກ່ພວກເຄັ່ງຄັດໃນ ການ ປະຕິບັດສາດສະໜາກໍເດີນທາງມາຈາກປະເທດໄທ ປີລະເທື່ອ ຫລື ສອງເທື່ອ. ນັບຕັ້ງແຕ່ປີ 2001 ລັດຖະບານໄດ້ຕິດຕາມເບິ່ງການເຄື່ອນໄຫວຕ່າງໆ ຂອງພົນລະ ເມືອງຊາວມຸດສະລິມ ທີ່ມີຈຳນວນນ້ອຍນັ້ນຢ່າງໃກ້ຊິດ, ແຕ່ກໍບໍ່ແຊກແຊງເຂົ້າ ໃນກິດຈະກຳ ທາງສາດສະໜາ ຂອງປະຊາຄົມເຂົາເຈົ້າ. ໃນຊ່ວງປີ 2005 ແລະ 2006 ຜູ້ນຳສາດສະຫນາມຸດສະລິມຢູ່ລາວພອ້ມກັບບັນດາຊະມະຊິກຂອງກຸ່ມສາສະຫນາອື່ນໆ ໄດ້ເປັນຕົວແທນໃຫ້ລັດທະບານເພື່ອເຂົ້າຮວ່ມກອງປະຊຸມ ສາດສະຫນາ (an Interfaith Conference on Religion) ທີ່ ແຂວງຈັກກະຕາ, ປະເທດອິນໂດເນເຊຍ.

ໂບດສາດສະໜາ ເຊວັນເດ ແອັດແວນຕິດທີ່ບໍ່ໃຫຍ່ ທີ່ຢູ່ແຂວງວຽງຈັນ ແລະບໍ່ແກ້ວ ໄດ້ລາຍງານວ່າລັດຖະບານບໍ່ໄດ້ມີການແຊກແຊງເຂົ້າໃນກິດຈະກຳຂອງເຂົາເຈົ້າແຕ່ຢ່າງໃດ ໃນໄລຍະສອງສາມປີທີ່ ຜ່ານມາ ກໍປາກົດວ່າບັນດາສະມາຊິກຂອງໂບດດັ່ງກ່າວ ສາມາດປະຕິບັດສາດສະໜາຂອງ ເຂົາເຈົ້າໄດ້ຢ່າງເສລີ.

ບັນດາສະພາປົກຄອງຂອງຊາວບາຮາຍຢູ່ເມືອງວຽງຈັນແລະສະຫວັນນະເຂດນັ້ນໄດ້ປະຕິບັດສາດສະຫນາຢ່າງເສລີ ແຕ່ ປະຊາຄົມນ້ອຍໆຢູ່ແຂວງຄຳມວນ ແລະ ສະຫວັນນະເຂດ ການປະຕິບັດ

ສາດສະຫນາແມ່ນຖືກຈຳກັດຈາກເຈົ້າຫນ້າທີ່ທ້ອງຖິ່ນ.  ບັນດາສະພາປົກຄອງຂອງຊາວບາຮາຍ ຢູ່ວຽງຈັນໄດ້ປະເຊີນຫນ້າກັບຄວາມຫຍຸ້ງຍາກໃນການສ້າງຕັ້ງສູນບາຮາຍຂອງຕົນທີ່ວຽງຈັນໃນ ໄລຍະຜ່ານມາ ຢ່າງໃດກໍ່ຕາມເຈົ້າຫນ້າທີ່ ໄດ້ອະນຸຍາດູ້ໃຫ້ສະພາຄອບຄອງທີ່ດິນ. ບັນດາສະພາປົກຄອງແລະ ສະພາປົກຄອງ ລະດັບຊາດຂອງຊາວບາຮາຍໄດ້ຈັດບຸນ 19 ວັນ ຂອງເຂົາເຈົ້າຂຶ້ນເປັນປະຈຳ ແລະທຳການ ສະເຫລີມສະຫລອງວັນບຸນສັກສິດຕ່າງໆທັງໝົດ. ສະພາປົກຄອງລະດັບຊາດຂອງຊາວບາຮາຍ ກໍ່ປະຊຸມກັນເປັນປະຈຳ ແລະ ສາມາດສົ່ງຄະນະ ຜູ້ແທນໄປຍັງສູນກາງປົກຄອງຂອງສາດສະໜາ ບາຮາຍ ທີ່ເອີ້ນວ່າ ຢູນິເວີໂຊ ເຮົາສ ອອບ໌ ຈັດສຕິກຊ (Universal House of Justice) ຊຶ່ງຕັ້ງຢູ່ພູເຂົາ ຄາແມລ ໃນເມືອງໄຮຟາ ຢູ່ປະເທດ ອິດສະລາແອນ.

ລັດຖະບານກຳນົດໃຫ່ມີວັນພັກທາງລັດທະການ ເພື່ອສະເຫລີມສະຫລອງບຸນສາດສະຫນາສອງວັນ ບຸນທາດຫລວງ (ບຸນອອກພັນສາ) ແລະ ບູນປີໃຫມ່ຂອງຊາວພຸດໃນເດືອນ ເມສາ ເຊິ່ງເປັນບຸນ ສະເຫລີມສະຫລອງທາງສາດສະໜາພຸດ ທີ່ມີຄວາມນິຍົມຈາກປະຊາຊົນ ແລະ ຄວາມສຳຄັນ ທາງວັດທະນະທຳ ແລະ ບັນດາເຈົ້າໜ້າທີ່ ອາວຸໂສທັງຫມົດກໍ່ໄດ້ເຂົ້າຮ່ວມບຸນເຫລົ່ານັ້ນຢ່າງ ເປີດເຜີຍ. ລັດຖະບານອະນຸຍາດໂດຍທົ່ວໄປແລ້ວແມ່ນອະນຸຍາດໃຫ້ ຈັດສະເຫລີມສະຫລອງ ບຸນສຳຄັນທາງສາດສະໜາໄດ້ໂດຍບໍ່ມີການກີດກັ້ນຂັດຂວາງ ແຕ່ຢ່າງໃດ. ໃນອະດີດ ເຈົ້າຫນ້າທີ່ທ້ອງຖິ່ນຢູ່ບາງຂົງເຂດຍັງໄດ້ກີດກັ້ນກຸ່ມຊາວຄຣິດສຕຽນບໍ່ໃຫ້ ມີວັນພັກເພື່ອ ສະເຫລີມສະຫລອງເຊັ່ນ ວັນຄຣິດສມາດສ. ເຈົ້າຫນ້າທີ່ຮັບຜິດໂບດໄດ້ລະບຸວ່າມີການຈຳກັດ ກິດຈະກຳ ເພື່ອສະເຫລີມສະຫລອງວັນຄຣິດສມາດສໃນປີ 2005 ຫລາຍກວ່າປີທີ່ຜ່ານມາ.

ເຈົ້າຫນ້າທີ່ໄດ້ຮຽກຮ້ອງໃຫ້ນິກາຍໃຫມ່ໆເຂົ້າຮວ່ມກັບກຸ່ມສາດສະຫນາອື່ນໆທີ່ມີປະຫວັດຄວາມ ເປັນມາທີ່ຄ້າຍຄືກັນເຖິງແມ່ນວ່າຈະປະຄວາມແຕກຕ່າງໃນການນັບຖືລະຫວ່າງສອງກຸ່ມຢ່າງຈະ ແຈ້ງກໍ່ຕາມ. ໃນຊ່ວງເດືອນມີນາ ປີ 2004 ຄຳສັ່ງຈາກສູນກາງແນວລາວສ້າງຊາດ ເລກທີ່ 1 ໄດ້ຮຽກຮ້ອງໃຫ້ບັນດາກຸ່ມໂພຣແຕັກສຕັນທັງຫມົດຮວ່ມເຂົ້າເປັນສວ່ນຫນຶ່ງຂອງໂບດ LEC ຫລື ເຊວັນເດ ແອັດແວນຕິດ. ຄຳສັ່ງຍັງລະບຸວ່າຈະບໍ່ອະນຸຍາດໃຫ້ນິກາຍອື່ນໆຂຶ້ນທະບຽນເພື່ອເປັນ ມາດຕະຖານໃນການ ປອ້ງກັນ “ຄວາມບໍ່ລົງຮອຍ” ໃນປະຊາຄົມສາດສະຫນາ.

ໂດຍບໍ່ມີການສິດສອນເລື່ອງ ສາດສະໜາ ຢູ່ໃນໂຮງຮຽນລັດ ແລະ ກໍ່ບໍ່ມີໂຮງຮຽນໃດ ທີ່ຂຶ້ນກັບໂບດ ຫລື ສາດສະໜາໃດທີ່ ເປີດສອນຢູ່ໃນປະເທດ. ຢ່າງໃດກໍ່ດີ ຍັງມີໂຮງຮຽນກຽມ ແລະ ໂຮງຮຽນສອນ ພາສາອັງກິດເອກະຊົນ ຫລາຍແຫ່ງ ໄດ້ຮັບການສະນັບສະຫນູນຈາກກຸ່ມສາດສະຫນາຈາກຕ່າງ ປະເທດ. ໃນພາກປະຕິບັດ ຕົວຈິງມີເດັກຊາຍຫລາຍຄົນທີ່ໃຊ້ເວລາບາງຊ່ວງໃນ ວັດສາດສະຫນາ

ພຸດ ເຊິ່ງເປັນບອນທີ່ພວກເຂົາ ໄດ້ຮັບການຮໍາຮຽນໃນດ້ານສາດສະໜາກໍ່ຄືດ້ານການສຶກສາຕ່າງໆ. ແຕ່ໃດໆມາແລ້ວ ວັດ ແມ່ນໄດ້ມີໜ້າທີ່ບົດບາດຄືໂຮງຮຽນ ແລະ ປະຈຸບັນກໍ່ຍັງສືບຕໍ່ດໍາເນີນບົດບາດ ດັ່ງກ່າວນີ້ຢູ່ໃນໝູ່ ປະຊາຄົມນ້ອຍໆ ບ່ອນ ທີ່ການສຶກສາຢ່າງເປັນທາງການຍັງບໍ່ທັນໄປເຖິງ ຫລືວ່າບໍ່ມີເລີຍ. ນິກາຍຕ່າງໆຂອງສາດ ສະໜາຄຣິສຕຽນ ໂດຍສະເພາະໂບດອີແວນເຈີລີເກີນລາວ, ເຊເວັນເດ ແອັດແວນຕິສ ແລະ ໂບດ ແຄທໍລິກນັ້ນພາກັນເປີດໂຮງຮຽນສອນສາດສະໜາ ໃນວັນອາທິດໃຫ້ແກ່ບັນດາເດັກນ້ອຍ ແລະ ຊາວໜຸ່ມ. ບັນດາສະພາປົກຄອງຂອງຊາວບາຮາຍ ກໍ່ຈັດການບໍາລຸງ ສາດສະໜາໃຫ້ແກ່ເດັກນອ້ຍ ແລະ ຜູ້ໃຫຍ່ເຊັ່ນດຽວກັນ.

ລັດຖະບານຮຽກຮອ້ງໃຫ້ມີການຂໍອະນຸຍາດສໍາຫລັບການມີສາຍພົວພັນຢ່າງເປັນທາງການກັບກຸ່ມທີ່ ນັບຖືສາດສະໜາດຽວກັນ ຢູ່ຕ່າງປະເທດ. ໃນພາກປະຕິບັດນັ້ນເສັ້ນແບ່ງແຍກລະຫວ່າງສາຍພົວພັນ ທີ່ເປັນທາງການ ແລະ ບໍ່ເປັນທາງການ ແມ່ນບໍ່ແຈ້ງຂາວ ແລະໂດຍທົ່ວໄປແລ້ວກໍສາມາດຕັ້ງ ສາຍພົວພັນນັ້ນໄດ້ໂດຍ ບໍ່ມີຄວາມຫຍຸ້ງຍາກຫລາຍປານໃດ.

*ການກໍາຈັດຮັດແຄບຕໍ່ເສລີພາບໃນການນັບຖືສາດສະໜາ.*

ການປະນີປະນອມຂອງລັດຖະບານໃນເລື່ອງສາດສະໜານັ້ນ ແຕກຕ່າງກັນຢູ່ໃນແຕ່ລະຂົງເຂດ ແລະ ສໍາລັບແຕ່ລະສາດສະໜາ, ສໍາລັບສາດສະໜາ ອີແວັນເຈີລີເກີລ ໂພແຕັສຕັນ ຮວ່ມກັບໂບດ LEC ແລະ ກຸ່ມໂພແຕັສຕັນທີ່ອື່ນໆທີ່ຢາກຈະຖືກຮັບຮູ້ວ່າແຍກຕົວຈາກ ໂບດ LEC ຍັງສືບຕໍ່ຕົກ ເປັນເປົ້າໝາຍຂອງການກໍາຈັດຮັດແຄບຫລາຍທີ່ສຸດ. ສາດສະໜາພຸດນັ້ນ ເຖິງແມ່ນວ່າ ບໍ່ໄດ້ຕົກ ເປັນເປົ້າຂອງການຣາວີລົບກວນກໍ່ຕາມ ແຕ່ຄະນະປົກຄອງຂອງສາດສະໜາ ກໍຖືກລັດຖະບານ ຄວບຄຸມ ຕິດຕາມເບິ່ງຢ່າງໄກ້ຊິດ. ປະທານອົງການ ພຸດທະສາດສະໜາ ຫລື ພະສັງຄະລາດຍັງ ສືບຕໍ່ດໍາເນີນສາຍພົວພັນຢ່າງໃກ້ສິດກັບລັດທະບານ. ຜົນໄດ້ຮັບຂອງນະໂຍບາຍທີ່ບໍ່ລວມສູນຂອງ ລັດທະບານກໍ່ຄື ລັດທະບານໄດ້ກະຈາຍອໍານາດລົງຊູ່ ແຂວງ ແລະ ເມືອງຕ່າງໆ ແຕ່ຍອັນການ ຄວບຄຸມພຶດຕິກໍາຂອງເຈົ້າໜາທີ່ທອ້ງຖິ່ນທີ່ອອນແອ່ ຈາກສູນກາງເຮັດໃຫ້ເຈົ້າໜ້າທີ່ທອ້ງຖິ່ນ ມັກຈະບໍ່ຮັບຮູ້ເຖິງນະໂຍບາຍຂອງລັດທະບານເຊັນການປະນີປະນອມທາງສາດສະໜາຍອັນການ ຂາດລະບຽບກົດໝາຍໄປພອ້ມກັນກັບການກະຈາຍກົດໝາຍນໍາໃຊ້ທີ່ມີຢູ່ຍັງບໍ່ສໍາເລັດ. ໃນເວລາທີ່ສູນກາງແນວລາວສ້າງຊາດ ໄດ້ລົງຢ້ຽມຢາມເຂົາເຂດທີ່ມີຂໍ້ຂັດແຍ່ງດ້ານສາດສະໜາ ເພື່ອໄປແນະນໍາເຈົ້າໜ້າທີ່ທອ້ງຖິ່ນກຽ່ວ ກັບນະໂຍບາຍຂອງລັດທະບານນັ້ນຫລາຍໆຄັ້ງທີ່ ກົມວຽກງານດ້ານສາດສະໜາໃດ້ລະລົມເຈົ້າໜ້າທີ່ທອ້ງຖິ່ນ ຫລື ພະນັກງານແຂວງໃຫ້ແກ້ໄຂ ຂໍ້ຂັດແຍງດວ້ຍຕົວເຂົາເອງໂດຍອີງໃສດໍາລັດເລກທີ 92.

ສ່ວນໃນເຂດຕົວເມືອງໃຫຍ່ອື່ນໆເຊັ່ນ: ວຽງຈັນ, ທ່າແຂກ, ປາກເຊ ແລະ ສະຫວັນນະເຂດນັ້ນ ການແກ່ງແຍ້ງທາງສາດສະໜາແມ່ນມີໜ້ອຍຫລາຍ ຫລື ບໍ່ມີເລີຍ ໂດຍອີງຕາມການລາຍງານຂອງ ຫົວໜ້າກຸ່ມສາດສະໜາໃນຂົງເຂດນັ້ນ. ປະຊາຄົມ ໂພຣແຕັສຕັນ ແລະ ແຄທໍລິກ ໃຫຍ່ໆ ຢູ່ໃນຫລາຍໆແຂວງ ລວມທັງແຂວງ ຊຽງຂວາງ, ຄໍາມ່ວນ ແລະຈໍາປາສັກ ໄດ້ລາຍງານ ວ່າບໍ່ໄດ້ມີບັນ ຫາຍຸ້ງຍາກໃດໆກັບພວກເຈົ້າໜ້າທີ່ເລີຍ, ຄວາມສໍາພັນລະຫວ່າງເຈົ້າໜ້າທີ່ກັບຊາວ ຄຣິສຕຽນ ແມ່ນເປັນມິດ ແລະ ຢູ່ຮ່ວມກັນຢ່າງສັນຕິ, ຢ່າງໃດກໍ່ຕາມ ຍັງມີລາຍງານວ່າການປະຕິບັດ ສາດສະໜາໃນທົ່ວປະເທດຍັງໄດ້ຖືກຈໍາກັດຮັດແຄບ ຍ້ອນກົດລະບຽບ ແລະ ນະໂຍບາຍຕ່າງໆ ຂອງທາງການທີ່ອະນຸຍາດໃຫ້ບັນດາກຸ່ມສາດສະໜາ ທີ່ໄດ້ຈົດທະບຽນຢ່າງຖືກຕ້ອງແລ້ວ ປະຕິບັດ ຄວາມນັບຖືຂອງ ເຂົາເຈົ້າໄດ້ພາຍໃນຂອບເຂດທີ່ຈໍາກັດເທົ່ານັ້ນ.

ໃນລະຫວ່າງປີ 1999 - 2001 ເຈົ້າໜ້າທີ່ທ້ອງຖິ່ນໄດ້ປິດໂບດຂອງກຸ່ມນັບຖືສາດາະໜາ ຄຣິສຕຽນ ນິກາຍອີເວັນເຈີລີເກິ່ນລາວ ( LEC ) ປະມານ 20 ແຫ່ງໃນຈໍານວນ 60 ແຫ່ງທີ່ມີໃນ ແຂວງວຽງຈັນ, ເບື້ອງຕົ້ນແມ່ນຢູ່ ໃນເຂດຫີນເຫີບ, ເມືອງເຟືອງ ແລະ ວັງວຽງ; ແລະໂບດ LEC ປະມານ 65 ແຫ່ງ ຢູ່ແຂວງ ສະຫວັນນະເຂດ ແລະ ຫລວງພະບາງ. ຍອ້ນມີນະໂຍບາຍທີ່ຜ່ອນຜັນກວ່າໃນການ ໃຫ້ປະນີປະນອມທາງສາດສະນາໃນຊ່ວງຕົ້ນປີ 2002 ໂບດທີ່ຖືກປິດລົງຫລາຍແຫ່ງ ນັ້ນໄດ້ຮັບ ອະນຸຍາດໄຫ້ເປີດຄືນໃໝ່ ໂດຍສະເພາະຢູ່ແຂວງ ວຽງຈັນ ແລະ ຫລວງພະບາງ ຢ່າງໃດກໍ່ຕາມ ຍັງມີໂບດ 5 ຫລື 6 ແຫ່ງຂອງຈໍານວນໂບດທັງຫມົດຢູ່ແຂວງສະຫວັນນະເຂດປະມານ 40 ແຫ່ງ ຍັງບໍ່ໄດ້ຮັບອະນຸຍາດໃຫ້ເປີດຄືນໃຫມ່ໃນໄລຍະຕອນທ້າຍຂອງການເຮັດບົດລາຍງານນີ້.

ເຈົ້າຫນ້າທີ່ຢູ່ບ້ານຄໍາສານກໍ່ຍັງສືບຕໍ່ບໍ່ຍິນຍອມໃຫ້ກຸ່ມນັບຖືສາດາະໜາ ຄຣິສຕຽນ ນິກາຍອີເວັນ ເຈີລີເກິ່ນລາວ(LEC)ເປີດໂບດພວກເຂົາທີ່ຖືກປິດໃນປີດໃນປີ 2003 ຄືນໄຫມ່. ເຈົ້າຫນ້າທີ່ຢູ່ ເມືອງເຟືອງ, ແຂວງວຽງຈັນໄດ້ອະນຸຍາດໃຫ້ສະມະສິກ LEC ສ້າງໂບດທີ່ຖືກທໍາລາຍໃນປີ 2005 ຢູ່ບ້ານໂພນງາມຄືນໄຫມ່ ແລະ ໂບດກໍ່ຖືກເປີດຄືນໃມ່ນັບແຕ່ນັ້ນມາ.

ໃນໄລຍະເວລາເຮັດລາຍງານນີ້ ບໍ່ໄດ້ມີລາຍງານວ່າໂບດ LEC ຖືກປິດນອກຈາກມີໂບດ ແຫ່ງຫນື່ງຢູ່ບານຫວ້ຍນອ້ຍ ແຂວງບໍ່ແກ້ວ ທີ່ຖືກເຈົ້າຫນ້າທີ່ບ້ານຈູດເຜົານັ້ນ. ຜູ້ນໍາໂບດໄດ້ຖືກ ປອ່ຍຕົວເປັນອິດສະຫລະໃນຕໍ່ມາໃນຊ່ວງທ້າຍປີ 2005. ຜູ້ນໍາໂບດຄົນຫນຶ່ງ ຊື່ວ່າສົມສັກ ທີ່ເຄີຍເປັນເຈົ້າເມືອງນັ້ນ ໄດ້ເຈັບໄຂໃນໄລຍະຖືກຄຸມຂັງ ແລະຖືກຍ້າຍໄປປົວຢູ່ທີ່ໂຮງຫມໍທະຫານ ແຕ່ລາວກໍ່ເສຍຊີວິດໃນເດືອນພະຈິກ. ຜູ້ເຄັ່ງສາດສະຫນາບາງທ່ານກ່າວວ່າລັດທະບານ ໄດ້ຢຸດຈ່າຍ ເງິນບໍານານໃຫ້ສົມສັກ ຫລັງຈາກລາວປ່ຽນມານັບຖືສາດສະຫນາຄຣິດສະຕຽນໃນຊ່ວງ 2-3

ປີຜ່ານມາ. ມີລາຍງານວ່າໃນຕົ້ນເດືອນທັນວາ ປີ 2005 ໄດ້ມີການປ່ອຍຕົວຜູ້ທີ່ຖືກຈັບສອງຄົນ ແລະ ໃນທ້າຍເດືອນທັນວາແມ່ນຍັງເຫລືອອີກສາມຄົນ.

ໃນປີ 2004 ລັດທະບານໄດ້ອະນຸຍາດໃຫ້ມີການ ສ້າງໂບດ ໄຫມ່ໆຢ່າງງຽບໆ ເຊີ່ງລວມທັງໂບດຄາໂທລິກແຫ່ງທຳອິດນັບຕັ້ງແຕ່ປີ 1975 ຢູ່ທາງພາກເຫນືອ ຂອງປະເທດລາວ, ໂບດຄາໂທລິກຢູ່ແຂວງບໍລິຄຳໄຊ, ໂບດ LEC ສີ່ແຫ່ງເມືອງໄຊສົມບູນເຊີ່ງເປັນເຂດພິເສດໃນເມື່ອກອນ ແລະ ແຂວງບໍລິຄຳໄຊ. ເຈົ້າຫນ້າທີ່ຢູ່ແຂວງວຽງຈັນຍັງໄດ້ອະນຸຍາດໃຫ້ສ້າງໂບດ LEC ທີ່ຖືກທຳລາຍຢູ່ບ້ານໂພນງາມຄືນໄຫມ່. ຫລາຍໆແຂວງກໍ່ຍັງໄດ້ອະນຸຍາດໃຫ້ ກຸ່ມຊາວຄຣິດ ສະຕຽນບາງກຸ່ມຂະຫຍາຍ ຫລື ປັບປຸງໂບດໃຫ້ສາມາດນຳໃຊ້ໄດ້ໃນໄລຍະຍາວເຊີ່ງແຕກຕ່າງກັບນະໂຍບາຍໃນການປະຕິເສດທຸກໆການສະເຫນີເຫລົ່ານີ້ໃນເມື່ອກອນ.

ໃນຈຳນວນເກືອບ 200 ກຸ່ມ ທີ່ປະຕິບັດສາດສະໜາ LEC ຢູ່ໃນບ້ານ ແລະ ເມືອງຕ່າງໆ ນັ້ນມີຫລາຍກ່ວາ 400 ກຸ່ມ ທີ່ບໍ່ມີໂບດຖາວອນໄດ້ພາກັນສວດມົນພາວະນາ ແລະ ປະຕິບັດສາດສະໜາຂອງເຂົາເຈົ້າຢູ່ຕາມ ບ້ານເຮືອນຂອງສະມາຊິກ, ນັບແຕ່ທີການປະກາດໃຊ້ດຳລັດເລກທີ 92 ເປັນຕົ້ນມາ ກົມວຽກງານ ທາງສາດສະໜາ ຂອງ ສູນກາງແນວລາວສ້າງຊາດ ໄດ້ຮັບເອົາທັດສະນະທີ່ວ່າ ການປະກອບ ພິທີທາງໂບດຢູ່ເຮືອນຄວນຈະຖືກແທນທີ່ດ້ວຍໂບດທີ່ເປັນອາຄານທີ່ໄດ້ກຳນົດໄວໃນເມືອໄດກໍ່ ຕາມທີ່ເຫມາະສົມ. ໃນຂະນະດຽວກັນ ບັນດາຫ້ອງການຂອງສູນກາງແນວລາວສ້າງຊາດໃນລະດັບບ້ານ ແລະ ລະດັບເມືອງຕ່າງໆ ກໍ່ຍັງໄດ້ປະຕິເສດບໍ່ໃຫ້ມີການກໍ່ສ້າງໂບດໃໝ່ຂຶ້ນ ຢູ່ເລື້ອຍໆ, ແລະ ໂບດຢູ່ທີ່ເຮືອນກໍ່ຍັງເປັນບອ່ນທີ່ ກຸ່ມ LEC ຫລາຍກຸ່ມພາກັນສວດມົນພາວະນາ.

ໂບດນິກາຍ LEC ໄດ້ປະ ສົບກັບຄວາມຍຸ້ງຍາກ ໃນການຈົດທະບຽນ ສຳຫລັບພວກທີ່ເຕົ້າໂຮມກັນເປັນກຸ່ມປະຕິບັດ ສາດສະໜາໃໝ່ ແລະ ໃນການອະນຸຍາດຈັດຕັ້ງບ່ອນສວດມົນພາວະນາໃໝ່ ຫລືສ້ອມແປງ ສະຖານທີ່ ແລະ ສິ່ງອຳນວຍຄວາມສະດວກທີ່ມີຢູ່ແລ້ວ ໂດຍສະເພາະແມ່ນຢູ່ເມືອງຫລວງພະບາງ, ແຂວງອັດຕະປື, ຫລວງນຳທາ ແລະ ສະຫວັນນະເຂດ.

ນອກນີ້ເຈົ້າໜ້າທີ່ຍັງບັງຄັບໃຫ້ກຸ່ມນັບຖືນິກາຍໃໝ່ທັງຫລາຍໂຮມເຂົ້າກັບກຸ່ມສາດສະໜາອື່ນໆທີ່ມີເຊື້ອສາຍທາງ ປະຫວັດສາດຄ້າຍຄືກັນ ເຖິງແມ່ນວ່າມີຄວາມ ແຕກຕ່າງກັນຢ່າງຈະແຈ້ງໃນດ້ານຄວາມເຊື່ອຖືຂອງເຂົາເຈົ້າກໍຕາມ. ຢ່າງຫນ້ອຍກໍ່ມີສອງແຂວງຄື ແຂວງຊຽງຂວາງ ແລະ ຫລວງພະບາງ ທີ່ເຈົ້າຫນ້າທີ່ໄດ້ຂູ່ວ່າຈະຈັບກຸ່ມ ບັນດາຫົວຫນ້າອະວຸໂສຂອງໂບດເພື່ອເປັນການບັງຄັບໃຫ້ໂບດ "ອິດສະລະ" ບໍ່ໃຫ້ມີການພົວພັນກັບ ໂບດໂພເຕັກສຕັນຢູ່ສະຫະລັດອາເມຣິກາ ແລະ ໃຫ້ກັບຄືນມາຮວ່ມກັບໂບດ LEC, ຢ່າງໄດກໍ່ຕາມ ໂບດອິດສະລະຢູ່ເຂດອື່ນໆພາຍໃນປະເທດກໍ່ໄດ້ຮັບ

ອະນຸຍາດໃກ້ການບໍ່ລິການໂດຍບໍ່ຖຶກຂັດຂວາງຈາກເຈົ້າຫນ້າທີ່ທອ້ງຖິ່ນ. ແຕ່ໃນຊ່ວງຕົ້ນປີ 2006 ໄດ້ປະກົດວ່າມີເຈົ້າຫນ້າທີ່ຢູ່ບາງບ້ານ ແລະ ເມືອງ ມີທ່າທີວ່າຈະມີຈຸດຢືນທີ່ຕ້ານກັບກຸ່ມ ໂພຣແຕັກສຕັນ ນິກາຍເມໂທດິສທທີ່ບໍ່ໄດ້ຮັບອະນຸຍາດ.

ບັນດາເຈົ້າໜ້າທີ່ຍັງມີຄວາມລະແວງສົງໄສຕໍ່ພວກສະໜັບສະໜູນ ແລະ ອຸປະກາລະແກ່ປະຊາຄົມ ສາດສະໜາຕ່າງໆ ນອກຈາກສາດສະໜາພຸດ ໂດຍສະເພາະແມ່ນກຸ່ມ ຊາວຄຣິສຕຽນ, ເຫດຜົນ ສ່ວນໜຶ່ງ ກໍ່ແມ່ນຍ້ອນວ່າ ບັນດາຜູ້ຄົນທີ່ນັບຖືສາດສະໜາເຫລົ່ານີ້ບໍ່ໄດ້ຮັບການຊີ້ນຳໃນລະດັບສູງ ແລະ ບໍ່ໄດ້ຖືກໂຮມເຂົ້າໃນໂຄງສ້າງຂອງລັດຖະບານ ຄືກັນກັບ ສາດສະໜາພຸດ ນິກາຍເຖລະວາດ ນັ້ນ. ເຈົ້າໜ້າທີ່ບາງຄົນຕຳນິຕິຕຽນສາດສະໜາຄຣິສຕຽນໂດຍສະເພາະວ່າເປັນສິ່ງ “ ນຳເຂົ້າ “ ປະເທດ ໂດຍພວກຕາເວັນຕົກ ຫລື ພວກຈັກກະພັດ. ໃນທົດສະຫວັດທີ່ຜ່ານມາໂບດ LEC ໄດ້ແບກຫາບ ຄວາມເຈັບປວດທີ່ບັນດາເຈົ້າໜ້າທີ່ທ້ອງຖິ່ນ ພະຍາຍາມບຽດບຽນໂດຍການປິດໂບດ, ການຈັບກຸມ ຜູ້ນຳທາງສາດສະໜາ ແລະ ການບີບ ບັງຄັບໄຫ້ປະລະຄວາມເຊື່ອຖື. ໂບດ LEC ໄດ້ມີການເຕີບ ໃຫຍ່ຂະຫຍາຍຕົວຢ່າງໄວວາ ໃນໄລຍະໜຶ່ງທົດສະວັດ ຫລື ສິບປີຜ່ານມາ, ການ ຕິດຕໍ່ພົວພັນ ຂອງໂບດນີ້ກັບ ກຸ່ມສາດສະໜາ ອື່ນໆໃນຕ່າງປະເທດ, ການເຄື່ອນໄຫວເຜີຍແຜ່ ສາດສະໜາຢ່າງຫ້າວຫັນ ໂດຍສະມາຊິກຂອງໂບດ ບາງຄົນ ຕະຫລອດຮອດຄວາມເປັນອິດ ສະຫລະ ຈາກການຄວບຄຸມຂອງລັດຖະບານ ເຊິ່ງທັງໝົດນັ້ນ ແມ່ນໄດ້ມີສ່ວນຊ່ວຍເຮັດໃຫ້ພັກ ແລະ ລັດ ມີຄວາມລະແວງສົງໄສຕໍ່ການເຄື່ອນໄຫວຂອງໂບດ. ເຈົ້າໜ້າທີ່ບາງຄົນຍັງໄດ້ເລືອກເຟັ້ນ ການຕີ ຄວາມໝາຍຄຳສັ່ງສອນ ຂອງສາດສະໜາຄຣິສຕຽນ ທີ່ວ່າໄຫ້ເຊື່ອຟັງພະຜູ້ເປັນເຈົ້ານັ້ນ ວ່າ ໝາຍເຖິງບໍ່ໄຫ້ຈົງຮັກພັກດີຕໍ່ພັກ ແລະ ລັດ.

ຍັງມີຫລັງຖານທີ່ແຂງກ້າວ່າການເປັນຜູ້ນຳຄອມມູນິດໄດ້ສະແດງເຖິງແງ່ຄິດຂອງຕໍ່ສາດສະນາຄຣິດ ວ່າເປັນເຄືອງມືຂອງປະເທດຕາເວັນຕົກເພື່ອບອນທຳຮ້າຍລະບອບການເມືອງຄອມມູນິດ. ໃນແງ່ຄິດເຊັ່ນນີ້ເອງຈິ່ງສາມາດເຫັນໄດ້ເຖິງການປອງຮ້າຍຂອງລັດທະບານຕໍ່ອົງການສາດສະຫນາ ຄຣິດສ ເປັນຄືກັບມາດຕະການໃນການປອ້ງກັນລະບອບດັ່ງກ່າວ ໂດຍມູ່ງຫມາຍເພື່ອທີ່ຈະຮັກສາ ອຳນາດເພື່ອຕໍ່ຕ້ານກັບທຸກໆການຂົມຂູ່ທີ່ແອບແຝງມາ.  ບັນດາສະມາຊິກຂອງໂບດ LEC ສ່ວນໃຫຍ່ແມ່ນ ປະກອບດ້ວຍສະມາຊິກຂອງຊົນເຜົ່າມອນ, ຂະແມ ແລະຊາວມົ້ງອັນເປັນສອງກຸ່ມ ຊົນເຜົ່າ ທີ່ໄດ້ ຂັດຂືນຕ້ານຢັນການຄວບຄຸມຂອງ ລັດຖະບານກາງ ມາແຕ່ປະຫວັດສາດແລ້ວ ແລະ ເລື່ອງນີ້ກໍ່ໄດ້ມີສ່ວນເຮັດໄຫ້ພັກ ແລະ ລັດ ບໍ່ມີຄວາມໄວ້ເນື້ອເຊື່ອໃຈໂບດ LEC .

ໃນໄລຍະທີ່ເຮັດບົດລາບງານນີ້ບໍ່ໄດ້ມີລາຍງານວ່າມີການແຊກແຊງ ຫລືບໍ່ອະນຸຈາກ ລັດຖະບານ ເພື່ອໃຫ້ສະເຫລີມສະຫລອງ ບຸນສຳຄັນ ສຳຄັນຂອງສາດສະໜາ, ແຕ່ມີລາຍງານວ່າບໍ່ໃຫ້ຊາວ

ຄຣິດສະຕຽນຢູ່ຕາມບ້ານຕ່າງໆສະເຫລີມສະຫລອງຢູ່ເຮືອນຊານຂອງພວກເຂົາ ແລະ ຈຳກັດໃຫ້ມີການເຄືອນໄຫວຢູ່ສະເພາະແຕ່ໃນຕຶກຂອງໂບດເທົ່ານັ້ນ. ບໍ່ມີລາຍງານວ່າກອງກຳລັງ ຮັກສາຄວາມປອດໄພໄດ້ໂບກຢຸດລົດໂດຍສານໃນໄລຍະຊົ່ວໂມງສວດມົນໃນວັນອາທິດທີ່ຊາວບ້ານພາກັນເດີນທາງເພື່ອໄປໃຊ້ບໍລິການ.

ການຈຳກັດຮັດແຄບທີ່ມີມາເປັນເວລາດົນນານຕໍ່ການດຳເນີນງານຂອງໂບດຄາໂທລິກຢູ່ທາງພາກເໜືອນັ້ນໄດ້ສົ່ງຜົນໄຫ້ຍັງເຫລືອແຕ່ກຸ່ມນ້ອຍໆບໍ່ພຽງເທົ່າໃດກຸ່ມ ທີ່ໂຮມຊຸມນຸມກັນປະຕິບັດສາດສະໜານີ້ ຢູ່ໃນແຂວງບໍ່ແກ້ວ, ໄຊຍະບູລີ ແລະຫລວງນ້ຳທາ, ຢ່າງໃດກໍ່ດີມັນໄດ້ມີສັນຍານທີ່ບົ່ງບອກວ່າລັດທະບານໄດ້ໂຍະຍານໃນການຄວບຄຸມປະຊາຄົມ ຊາວຄາໂທລິກ ຢູ່ທາງພາກເໜືອ.

ລັດທະບານໄດ້ອະນຸຍາດໃຫ້ຄູນພໍ່ເດີນທາງໄປຫລວງພະບາງ ເປັນປະຈຳ ຫລາຍຂື້ນເພື່ອປະຕິບັດຫນ້າທີ່ບໍລິການປະຊາຄົມຊາວຄາໂທລິກທີ່ຢູ່ກັນຢ່າງກະແຈກ ກະຈາຍຢູ່ທີ່ນັ້ນ ແຕ່ຍັງມີການຈຳກັດການເດີນທາງຂອງເພີ່ນຢູ່. ບໍ່ມີນັກບວດແຄທໍລິກ ທີ່ໄດ້ຮັບ ການອຸປະສົມບົດຢ່າງເປັນທາງການນັ້ນ ປະຕິບັດໜ້າທີ່ຢູ່ທາງພາກເໜືອ ຈັກອົງເລີຍ ແລະ ສັບສິນຂອງໂບດຫລາຍຢ່າງລວມທັງໂຮງຮຽນແຫ່ງໜຶ່ງໃນວຽງຈັນກໍໄດ້ຖືກລັດຖະບານ ຍຶດເອົາໄປຫລັງປີ 1975 ແລະ ຍັງບໍ່ທັນໄດ້ຖືກສົ່ງຄືນເທື່ອ ແລະ ລັດຖະບານກໍບໍ່ໄດ້ຈ່າຍເງີນ ຄ່າຊົດເຊີຍໃດໆໃຫ້ເລີຍ. ໃນຕົ້ນປີ 2005 ເຈົ້າຫນ້າທີເຈົ້າຫນ້າທີໄດ້ອະນຸຍາດໃຫ້ຊາວຄາໂທລິກຢູ່ ບ້ານ ປົງວາງ ທີ່ ແຂວງໄຊຍະບູລີ ສາມາດສ້າງໂບດໄຫມ່ຂື້ນດວ້ຍການຊວ່ຍເຫລືອຈາກ ຫ້ອງການ ສົດເດັດ ພຣະປາປາ ນັນຊີໂອ (the Papal Nuncio office) ທີ່ບາງກອກ.  ເຊີ່ງເປັນໂບດແຫ່ງທຳອິດທີ່ໄດ້ ສ້າງຂື້ນຫລັງຈາກການສາງຕັ້ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວໃນປີ 1975. ສວ່ນໃນພາກກາງ ແລະພາກໃຕ້ ຂອງປະເທດນັ້ນ ກຸ່ມນັບຖືສາດສະໜາ ຄາໂທລິກຫລາຍກຸ່ມ ສາມາດປະຕິບັດສາດສະໜາຂອງເຂົາເຈົ້າໄດ້ຢ່າງເສລີ.

ໃນຊວ່ງທ້າຍປີ 2005 ໂບດ ຄາໂທລິກ ໄດ້ຂື້ນແຜນທີ່ຈະປະດຳເນີນການ ອຸປະສົມບົດທີ່ແຂວງບໍລິຄຳໄຊ ແຕ່ລັດທະບານກຢຸດຢັ້ງພິທີການແຕ່ຂັ້ນຕົ້ນ, ເຊີ່ງມັນກໍ່ອາດຈະເປັນການ ອຸປະສົມບົດຂອງຊາວຄາໂທລິກຄັ້ງທຳອິດນັບແຕ່ປີ 1975, ແນວໃດກໍ່ດີ ໃນຊ່ວງເດືອນ ມີຖຸນາ ປີ 2006 ການອຸປະສົມບົດກໍ່ໄດ້ຮັບອະນຸຍາດໃຫ້ດຳເນີ້ນທີ່ຄຳແພງນະຄອນ ໄປພອ້ມໆ ກັບການອຸປະສົມໃຫ້ພຣະທີ່ແຂວງຈຳປາສັກ.

ລັດຖະບານຫ້າມຊາວຕ່າງປະເທດປະຕິບັດການເຜີຍແຜ່ສາດສະໜາ, ເຖິງແມ່ນວ່າລັດຖະບານອະນຸຍາດ ໄຫ້ບັນດາອົງການຈັດຕັ້ງຕ່າງປະເທດທີ່ບໍ່ຂື້ນກັບລັດຖະບານ ທີ່ມີສາຍພົວພັນກັບໂບດ

ສາດສະໜາໃດໜຶ່ງດຳເນີນງານຢູ່ໃນປະເທດໄດ້ກໍ່ຕາມ. ຊາວຕ່າງດ້າວທີ່ຖືກກວດພົບວ່າ ມີການແຈກຢາຍເອກະສານທາງສາດສະໜາແມ່ນມີສິດຖືກຈັບ ຫລື ບໍ່ກໍຈະຖືກເນລະເທດ, ດຳລັດເລກທີ່ 92 ກໍລະບຸອອກມາຢ່າງຈະແຈ້ງວ່າ ອະນຸຍາດໃຫ້ມີການເຜີຍແຜ່ສາດສະໜາໂດຍພົນລະເມືອງລາວ ແຕ່ຕ້ອງໄດ້ຮັບການເຫັນດີເຫັນພ້ອມຈາກສູນກາງແນວລາວສ້າງຊາດເສຍກ່ອນ. ແຕ່ໃນພາກປະຕິບັດແລ້ວບັນດາເຈົ້າໜ້າທີ່ກໍຍັງຕີຄວາມໝາຍ ຂອງການເຜີຍແຜ່ສາດສະໜາ ເພື່ອຫັນປ່ຽນຄວາມເຊື່ອຖືນັ້ນວ່າເປັນກິດຈະກຳທີ່ຜິດກົດໝາຍທີ່ສ້າງຄວາມແບບແຍກໃນສັງຄົມ.

ບາງຄັ້ງເຈົ້າຫນ້າທີ່ໄດ້ຍຶດເອົາເອກະສານຕ່າງໆທາງ ສາດສະໜາ ແລະອຸປະກອນສິດສອນສາດສະຫນາຈາກຊາວລາວ ທີ່ຖືສາດສະຫນາຄຣິດສທີ່ມາຈາກຕ່າງປະເທດ ແລະຈັບກຸມເຂົາ ແລະຂັບໄລຊາວຕ່າງຊາດທີ່ພະຍາຍາມເຜີຍແຜ່ເພື່ອຫັນປ່ຽນສາດສະໜາອອກປະເທດ. ໃນຕົ້ນປີ 2006 ໄດ້ມີລາຍງານວ່າມີຊາວເກົາຫລີຖືກຈັບຢູ່ແຂວງບໍ່ແກ້ວຍອ້ອນການເຜີຍແຜ່ສາດສະຫນາ ແລະຖືກຂັບໄລອອກນອກປະເທດ. ເຖິງດຳລັດເລກທີ 92 ອະນຸຍາດໃຫ້ມີການຈັດພິມບົດຂຽນ ທາງສາດສະໜາ ທີ່ບໍ່ກ່ຽວຂ້ອງກັບສາດສະໜາພຸດ ແລະ ອະນຸຍາດໃຫ້ນຳເຂົ້າເອກະ ສານທາງສາດສະໜາຈາກຕ່າງປະເທດໄດ້ກໍຕາມ, ແຕ່ດຳລັດເລກທີ 92 ກໍບັງຄັບໃຫ້ຂໍອະນຸຍາດສຳຫລັບກິດຈະກຳຕ່າງໆເຫລົ່ານັ້ນຈາກສູນກາງແນວລາວສ້າງຊາດເສຍກ່ອນ. ສູນກາງແນວລາວສ້າງຊາດ ບໍ່ໄດ້ອະນຸຍາດໃຫ້ກຸ່ມທີ່ນັບຖືສາດສະໜາ ຄຣິສຕຽນ ຫລື ບາຮາຍ ຈັດພິມເອກະສານກ່ຽວກັບສາດສະໜາຂອງເຂົາເຈົ້າເອົາເອງ ເຖິງວ່າທັງສອງກຸ່ມນີ້ຮອ້ງຂໍຄຳອະນຸຍາດມາໄດ້ຫລາຍປີແລ້ວກໍ່ຕາມ. ຍັງມີເອກະສານທາງສາດສະໜາບາງຢ່າງໄດ້ຖືກລັກລອບນຳເຂົ້າປະເທດໂດຍ ພວກທີ່ເຊື່ອຖື, ຢ່າງໃດ ກໍ່ຕາມຜູ້ທີ່ນຳເອົາເອກະສານທາງສາດສະໜາເຂົ້າມານັ້ນ ອາດປະເຊີນກັບການຖືກ ຈັບກຸມກໍໄດ້. ຍ້ອນຂໍ້ຈຳກັດຮັດແຄບເຫລົ່ານີ້ ບັນດາກຸ່ມຄົນທີ່ປະຕິບັດສາດສະໜາຄຣິສຕຽນບາງກຸ່ມທີ່ໄດ້ຮັບຮອງຈາກທາງການນັ້ນໄດ້ມີການຈົ່ມວ່າ ກ່ຽວກັບຄວາມຍຸ້ງຍາກໃນການໄດ້ຮັບ ພະຄຳພີໄບເບີ້ລ ແລະ ເອກະສານທາງສາດສະໜາອື່ນໆ. ໃນໄລຍະເຮັດລາຍງານນີ້ ໄດ້ມີຊາວຄຣິດສຕຽນຈຳນວນໜື່ງຖືກຈັບກູມຢູ່ທີ່ຂົວມິດຕະພາບລາວໄທໃນຂໍ້ຫາພະຍາຍາມນຳເອົາຄຳພີໄບເບີ້ເຂົ້າປະເທດ ເຊີ່ງໂດຍທົ່ວໄປແລ້ວພວກເຂົາຈະຖືກກັກຕົວເປັນເວລາ 2-3 ວັນ. ມີກຸ່ມທີ່ບໍ່ແມ່ນຊາວຄຣິດສຕຽນຈຳນວນຫນື່ງໄດ້ກ່າວວ່າພວກເຂົາບໍ່ຖືກຈຳກັດໃນການນຳເອົາ ເອກະສານທາງສາດສະໜາເຂົ້າມາປະເທດ.

ໂດຍທົ່ວໄປລັດຖະບານ ບໍ່ແຊກແຊງເຂົ້າໃນການເດີນທາງຂອງພົນລະເມືອງ ທີ່ປາດຖະໜາຢາກເດີນທາງໄປຕ່າງປະເທດ ເພື່ອຮັບການເຝິກອົບຮົມທາງສາດສະໜາເປັນເວລາສັ້ນໆ, ແຕ່ວ່າລັດຖະບານບັງຄັບໃຫ້ພວກທີ່ປະສົງຈະເດີນທາງເພື່ອເປົ້າໝາຍດັ່ງກ່າວນັ້ນ ແຈ້ງໃຫ້ເຈົ້າໜ້າທີ່ຊາບກ່ຽວກັບຈຸດປະສົງໃນການເດີນທາງຂອງເຂົາເຈົ້າ ແລະ ໃຫ້ຂໍອະນຸຍາດລ່ວງໜ້າກ່ອນ.

ໃນຕົວຈິງແລ້ວຫລາຍໆຄົນຈາກທຸກສາດສະໜາ ໄດ້ເດີນທາງໄປຕ່າງປະເທດແບບບໍ່ ເປັນທາງການ ເພື່ອຮັບການເຝິກອົບຮົມທາງສາດສະໜາ ໂດຍບໍ່ໄດ້ຂໍໜັງສືອະນຸຍາດລ່ວງໜ້າ ຫລື ບໍ່ໄດ້ແຈ້ງໃຫ້ ເຈົ້າໜ້າທີ່ຊາບ ກ່ຽວກັບຈຸດປະສົງໃນການເດີນທາງຂອງເຂົາເຈົ້າ, ປົກກະຕິ ກະຊວງການຕ່າງ ປະເທດ ຈະອອກວີຊ່າໄປຕ່າງປະເທດໃຫ້ ຄືກັນກັບເປັນເລື່ອງປົກກະຕິທຳມະດາ, ແຕ່ບາງ ຄັ້ງຄາວກະຊວງການຕ່າງປະເທດກໍ່ບໍ່ອະນຸຍາດໃຫ້ຄົນທີ່ເຂົາຄິດວ່າມີຈິດຈະກຳທີ່ໜ້າສົງໄສເດີນ ທາງໄປຕ່າງປະເທດ.

ບັດປະຈຳຕົວ ທີ່ລັດຖະບານອອກໃຫ້ນັ້ນແມ່ນບໍ່ໄດ້ລະບຸການເປັນ ສະມາຊິກ ຂອງສາດສະໜາ ໃດໜຶ່ງ ກໍ່ເຊັ່ນດຽວກັບທະບຽນສຳມະໂນຄົວ ຫລື ຢູ່ໃນໜັງສື ຜ່ານແດນ ຊຶ່ງເປັນອີກສອງເອກະສານ ທີ່ສຳຄັນທີ່ຍັງຢືນເຖິງການເປັນພົນລະເມືອງ. ບາງຄັ້ງຄາວເຈົ້າໜ້າທີ່ກໍ່ບໍ່ຍອມອອກບັດປະຈຳຕົວ ຫລື ທະບຽນສຳມະໂນຄົວໃຫ້ແກ່ຊາວຄຣິດສຕຽນຍ້ອນການເຊື່ອຖືທາງສາດສະໜາຂອງເຂົາເຈົ້າ ຫລື ຂູ່ວ່າຈະບໍ່ຍອມອະນຸຍາດອອກເອກະສານທາງການໃຫ້ເຂົາເຈົ້າຖ້າຫາກເຂົາບໍ່ປະລະຄວາມ ເຊື່ອຖືຂອງເຂົາ.

*ການລະເມີດເສລີພາບໃນການນັບຖືສາດສະໜາ*

ບັນດາເຈົ້າໜ້າທີ່ຍັງສືບຕໍ່ຈັບກຸມບຸກຄົນ ຍ້ອນການເຄື່ອນໄຫວທາງສາດສະໜາຂອງເຂົາເຈົ້າ ການກັກຕົວບຸກຄົນຊຶ່ງມີຂຶ້ນໃນໄລຍະເວລາທີ່ກຳລັງເຮັດລາຍງານນີ້ ສ່ວນໃຫຍ່ແມ່ນກັກຕົວ ໃນໄລຍະສັ້ນ ໂດຍທົ່ວໄປແມ່ນສອງວັນ ເຖິງສອງອາທິດ. ຢ່າງໜ້ອຍມີຊາວຄຣິດສະຕຽນ ຈຳນວນໜຶ່ງຖືກກັກຕົວເປັນເວລາຫລາຍວັນຫລັງຈາກທີ່ພວກເຂົາພະຍາຍາມນຳເອົາຄຳພີໄບເບີ້ ເຂົ້າປະເທດທີ່ຂົວມິດຕະພາບ ລາວ-ໄທ. ໃນໄລຍະຕອນທ້າຍຂອງການເຮັດລາຍງານນີ້ມີຜູ້ທີ່ ຖືກກັກຕົວໃນຂໍ້ຫາກ່ຽວກັບສາດສະໜາຈຳນວນສາມສິບຄົນ, ມີຢູ່ແຂວງອຸດົມໄຊ ສອງຄົນ, ມີໜຶ່ງຄົນຢູ່ແຂວງສາລາວັນທີ່ຖືກກັກບໍລິເວນ ແລະ ມີຊາວເຈັດຄົນທີ່ແຂວງບໍລິຄຳໄຊ. ສະພາບ ການຢູ່ໃນຄຸກແມ່ນໂຫດຮ້າຍທີ່ສຸດ ແລະ ພວກທີ່ຖືກກັກຂັງ ຍ້ອນສາດສະໜາກໍ່ໄດ້ຮັບຄວາມທຸກ ທໍລະມານຄືກັນກັບພວກນັກໂທດຄົນອື່ນໆເຊັ່ນກັນ ຍ້ອນອັດຕາສ່ວນອາຫານບໍ່ພຽງພໍ, ຍ້ອນ ຂາດແຄນການ ຮັກສາພະຍາບານ ແລະ ບ່ອນຢູ່ຄັບແຄບແອອັດ.

ໃນປີ 1999 ເຈົ້າໜ້າທີ່ໄດ້ຈັບກຸມສະມະຊິກກຸ່ມ LEC ສອງຄົນທີ່ແຂວງອຸດົມໄຊ ມີຊື່ວ່າ ຍອດ ແລະ ທອງຈັນ, ພວກເຂົາຖືກຕັ້ງຂໍ້ຫາວ່າເປັນທໍລະຍົດ ແລະ ເປັນພວກຕໍ່ຕ້ານລັດທະບານ ຖືກແມ່ນວ່າການຈັບກຸມນີ້ປະກົດວ່າແມ່ນຍອ້ນ ພວກເຂົາເຜີຍແຜ່ສາດສະໜາ. ທ້າວ ຍອດ ຖືກຕັດສິນຈຳຄຸກ 12 ປີ ແລະ ທອງຈັນ ຖືກຕັດສິນຈຳຄຸກ 15 ປີ. ໃນໄລຍະຕອນທ້າຍຂອງການ

ເຮັດລາຍງານນີ້ ຊາຍ ທັງສອງຍັງຄົງຖືກຈອງຈຳຢູ່, ເຖິງແມ່ນວ່າມີການອຸທອນໃຫ້ທົບທວນຂະດີຂອງພວກເຂົາຄືນໃຫມ່.

ໃນຊ່ວງເດືອນ ກໍລະກົດ ເຖິງ ສິງຫາ ປີ 2004 ນັ້ນ ເຈົ້າຫນ້າທີ່ທີ່ ເມືອງກາສີ ແຂວງວຽງຈັນ ກໍ່ຍັງໄດ້ກັກຕົວ ຊາວຄຣິດສຕຽນ LEC ເປັນເວລາຫລາຍເດືອນ. ສະມະຊິກໂບດ LEC ຍັງຍ້ຳຄຳເດີມວ່າພວກເຂົ້າຖືກຈັບກຸມນັ້ນແມ່ນຍອ້ນການປະຕິບັດສາດສະຫນາຂອງພວກເຂົາ. ອີງຕາມແຫລ່ງຂ່າວຂອງ LEC, ໃນຊວ່ງທ້າຍປີ 2004 ເຈົ້າຫນ້າທີ່ ໄດ້ຈັບກຸມຊາວຍ້າວກຸ່ມນອ້ຍທີ່ນັບຖືສາດສະຫນາຄຣິດສຕຽນສອງຄົນທີ່ເມືອງລອງຊານ, ແຂວງວຽງຈັນ ຍອ້ນການເຜີຍແຜ່ສາດສະຫນາ.

ໃນຊ່ວງຕົ້ນປີ 2005 ເຈົ້າຫນ້າທີ່ເມືອງພີນ ແຂວງສະຫວັນນະເຂດ ໄດ້ກັກຕົວຊົນເຜົ່າ ບຣູ ທີ່ນັບຖືສາດສະໜາ ຄຣິສຕຽນ 24 ຄົນທີ່ພົວພັນກັບກຸ່ມ LEC ນັ້ນ ທີ່ຫ້ອງການຕຳຫລວດເມືອງ ເປັນເວລາຫລາຍວັນ ເພື່ອບັງຄັບໃຫ້ເຂົາປະລະຄວາມເຊື່ອຖືທາງສາດສະຫນາ. ໃນທັງຫມົດນັ້ນມີພຽງຊາຍສອງຄົນ ທີ່ປະລະສາດສະຫນາຂອງເຂົ້າເຈົ້າ. ຊາຍທັງສອງໄດ້ຖືກຄູມຂັງສະເລຍແລ້ວເປັນເວລາປີຫນື່ງແຕ່ໄດ້ມີລາຍງານວ່າຖືກປອ່ຍຕົວໃນຊ່ວງຕົ້ນປີ 2006. ພະນັກງານລັດທະການ ໄດ້ຈັບກຸມນັກບວດນິກາຍ LEC ໃນເດືອນມີຖຸນາ 2005 ໂດຍຕັ້ງຂໍ້ຫາວ່າ ເພີ່ນສ້າງຄວາມອັນຕະລາຍໃຫ້ແກ່ສະມະຊິກປົກຄອງ ແຂວງ. ອີງຕາມແຫລງຂ່າວຈາກ LEC ລາຍງານວ່າເພີ່ນໄດ້ຖືກປອ່ຍຕົວໃນຊວ່ງທ້າຍປີ 2005.

ໃນຊ່ວງເດືອນທັນວ່າ ປີ 2005 ເຈົ້າຫນ້າທີ່ຢູ່ແຂວງບໍລິຄຳໄຊ ໄດ້ກັກຕົວ ກຸ່ມຊົນກຸ່ມນອ້ຍຊາວມົ້ງຊາວເຈັດຄົນ. ທັງຫມົດໃນກຸ່ມນັ້ນແມ່ນເດັກເຊີ່ງມີຄົນຫນື່ງແມ່ນມາຕັ້ງຖີ່ນຖານຢູ່ ແຂວງເພັດຊະບູນໂດຍຖືກໃຫ້ອົບພະຍົກມາແຕ່ທາງພາກເຫນືອຂອງໄທ, ພວກເຂົາໄດ້ຖືກສົ່ງເຂົາປະເທດແບບຜິດປົກກະຕິໂດຍເຈົ້າຫນ້າທີ່ໄທໂດຍເຊື່ອວ່າ ເດັກເຫລົ່ານີ້ເຂົ້າເມືອງຜິດກົດຫມາຍ. ບາງລາຍງານລະບຸວ່າກຸ່ມດັ່ງກ່າວຄືຊາວຄຣິສຕຽນ ແລະ ອາດຈະຖືກຈັບຈັບກູມຢູ່ປະເທດລາວ ເພາະການນັບຖືສາດສະຫນາດັ່ງກ່າວ. ຊາວເຜົ່າມົ້ງຈຳນວນຊາວເຈັດ ຄົນນີ້ຍັງຖືກຄຸມຂັງຢູ່ໃນໄລຍະຕອນທ້າຍຂອງລາຍງານນີ້. ເພື່ອກໍ່ໃຫ້ເກີດມີຄວາມສັບສົນໃນກໍລະນີດັ່ງກ່າວ ລັດທະບານໄດ້ປະຕິເສດບໍ່ຮັບຮູ້ວ່າໄດ້ຄວບຄຸມກຸ່ມດັ່ງກ່າວນີ້ຢູ່.

*ການບັງຄັບໃຫ້ປຽນສາດສະໜາ*

ຄວາມພະຍາຍາມຂອງເຈົ້າຫນ້າທີ່ເພື່ອບັງຄັບໃຫ້ຊາວ ຄຣິດສະຕຽນ ເພື່ອໃຫ້ພວດເຂົາປະລະຄວາມເຊື່ອຖືແມ່ນຍັງຄົງມີຢູ່ບາງຂົງເຂດ. ໃນບາງກໍລະນີ ເຈົ້າຫນ້າທີ່ຂົ່ມຂູ່ກຸ່ມສາດສະຫນາ

ກຸ່ມນອ້ຍວ່າຈະຈັບກູມຫລືຂັບໄລພວກເຂົາອອກ ຈາກໝູ່ບ້ານຖ້າຫາກພວກເຂົາບໍ່ປະຕິບັດຕາມ, ແລະກໍ່ມີຕົວເລກວ່າມີກໍລະນີການກະທຳຂົ່ມຂູ່ເຊັ່ນນີ້.

ໃນຊວ່ງເດືອນ ຕຸລາ ປີ 2004, ເຈົ້າໜ້າທີ່ ຢູ່ບ້ານພຽງສະຫວັດ, ເມືອງ ໄຊສົມບູນ ເຊີ່ງເຄີຍເປັນເຂດພິເສດນັ້ນ ໄດ້ລາຍງານ ເຖິງການຂັ້ບໄລກຸ່ມຊາວ ຂະມຸ ຄຣິດສະຕຽນຈຳນວນເກືອບ 70 ຄົນຫລັງຈາກທີ່ພວກເຂົາປະຕິເສດ ທີ່ຈະປະລະຄວາມເຊື່ອຖືຂອງພວດເຂົາ. ໃນຊວ່ງເດືອນ ກຸມພາ ປີ 2005 ໄດ້ມີການຄັບໄລ ຊາວຄຣິດສະຕຽນຄັ້ງທີ່ສອງຢູ່ທີ່ບ້ານໂຄກໂພ, ແຂວງບໍລິຄຳໄຊ ເຊີ່ງຢູ່ບໍ່ໄກກັບບ້ານ ພຽງສະຫວັດ.

ໃນຊ່ວງເດືອນເມສາ ປີ 2006 ພະນັກງານປະຈຳເມືອງ ທີ່ເຂດສາລາວັນໄດ້ລາຍງານການຈັບກຸມສະມາຊິກ LEC ເຊີ່ງແມ່ນທ້າວ ອາເດີນເຊີ້ງລາວໄດ້ປະຕິເສດຄຳສັ່ງຈາກນາຍບ້ານໃຫ້ປະລະຄວາມເຊື່ອຖືຂອງລາວ. ລາຍງານກ່າວວ່າຄອບຄົວຂອງລາວແມ່ນໜຶ່ງໃນສີ່ຄອບຄົວຊາວຄຣິດສຕຽນທີ່ອາໃສຢູ່ບ້ານດັ່ງກ່າວ ແລະ ສອງຄອບຄົວກໍ່ຖືກບັງຄັບໃຫ້ອອກຈາກບ້ານໃນໄລຍະທີ່ລາວຖືກກັກ. ທ້າວ ອາເດີນ ຍັງຖືຖກັກບໍລິເວນໃນໄລຍະຕອນທ້າຍຂອງການເຮັດລາຍງານນີ້. ໃນໄລຍະສິບມື້ທຳອິດທີ່ລາວຖືກກັກ ໄດ້ມີລາຍງານວ່າລາວຖືກມັດຂໍ່ມື ແລະ ຂໍ່ຕີນຖືກລາມໂສ້ ແຕ່ກໍ່ຖືກປົດໂສ້ໃນຕໍ່ມາແລະ ອານຸຍາດໃຫ້ເຄື່ອໃຫວ່ໄປມາເປັນອິດສະຫລະພາຍໃນເຮືອນ.

ມີລາຍງານວ່າທີ່ດິນທີ່ເປັນຂອງຄອບຄົວຊາວຄຣິດສະຕຽນ ທີ່ບ້ານຮວງ ແຂວງອຸດົມໄຊ ໄດ້ຖືກຍຶດໂດຍນາຍບ້ານ ແລະກໍ່ໂອນໄປເປັນຂອງຄົນອື່ນຢູ່ບ້ານນັ້ນ ໃນຊ່ວງປີ 2006. ຊາວຄຣິດສຕຽນບາງຄົນທີ່ເຄີຍອາໃສຢູ່ບ້ານນັ້ນກ່າວວ່າພວກເຂົາຕ້ອງຍ້າຍໄປຢູ່ແຂວງຜົ້ງສາລີ ຫລັງຈາກຖືກກົດດັນຈາກນາຍບ້ານ. ອີງຕາມຄຳກ່າວຈາກພະນັກງານລັດທະບານ ແລະ LEC ກ່າວວາບັນຫາການຍຶດທີ່ດິນນັ້ນໄດ້ຖືກແກ້ໄຂແລ້ວ ແຕ່ກໍບໍ່ມີຄຳອະທິບາຍແບບແຈ່ມແຈ້ງວ່າ ໄດ້ມີການປະຕິບັນການຫຍັງລົງໄປແດ່ເພື່ອແກ້ໄຂສະຖານະການດັ່ງກ່າວ.

ບໍ່ມີລາຍງານໃດໆກ່ງວກັບການບັງຄັບໃຫ້ພົນລະເມືອງກຸ່ມນອ້ຍຊາວ ອາເມຣິກາ ຖືກລັກຈັບໂຕໄປ ຫລື ຖືກພາໜີອອກໄປ ຈາກສະຫະລັດ ຢ່າງຜິດກົດໝາຍ ທັນປ່ງນ ສາດສະໜາ ຫລື ກ່ງວກັບການປະຕໍ່ເສດ ບໍ່ຍອມສົ່ງ ພົນລະເມືອງຂອງສະຫະລັດ ເຫລົ່ານັ້ນ ກັບຄືນປະເທດ.

*ການເສີມຂະຫຍາຍ ແລະ ການພັດທະນາໃນທາງບວກໃນການນັບຖືສິດເສລີພາບທາງດ້ານສາດສະໜາ*

ການເກັບກຳການນັບຖືສິດເສລີພາບທາງດ້ານສາດສະໜາຂອງລັດທະບານ ໂດຍສະເພາະຕໍ່ຊາວຄຣິດສຕຽນກຸ່ມນ້ອຍນັ້ນ ຍັງຄົງມີການຂາດຕົກບົກຜ່ອງຍອັນບັນຫາຕ່າງໆຢູ່ໃນຂັ້ນທ້ອງຖິ່ນ ໂດຍການບຽດບຽນກັນຍ້ອນການເຊື່ອຖືສາດສະໜາທີ່ແຕກຕ່າງກັນທີ່ເກີດຂື້ນຫລາຍໆຄັ້ງຢູ່ຫລາຍໆແຂວງ.

ໃນການປະກາດຢ່າງເປັນທາງການຂອງລັດທະບານໃນປະຈຸບັນເພື່ອໃຫ້ມີການປອງດອງ ແລະ ມີຄວາມເທົ່າທຽມກັນໃນການເຊື່ອຖືສາດສະໜາ. ສູນກາງແນວລາວສ້າງຊາດກໍ່ຍັງສືບຕໍ່ ແນະນຳເຈົ້າໜ້າທີ່ທ້ອງຖິ່ນໃຫ້ມີການປະນີປະນອມ. ເຈົ້າໜ້າທີ່ຈາກສູນກາງແນວລາວສ້າງຊາດ ໄດ້ເດີນທາງຮ່ວມກັບຜູ້ຕ່າງໜ້າຂອງໂບດ LEC ໄປໃນຫລາຍໆແຂວງເພື່ອສົ່ງເສີມໃຫ້ມີຄວາມເຂົ້າໃຈກັນຫລາຍຂື້ນລະຫວ່າງກຸ່ມ LEC  ແລະ ເຈົ້າໜ້າທີ່ທ້ອງຖິ່ນ.

ໂບດ LEC ຍັງຄົງສືບຕໍ່ດຳເນີນໂຄງການໃຫ້ບໍລິການແກ່ສະຫາລະນະຊົນຢ່າງມີປະສິດທິຜົນໃນໄລຍະເຮັດລາຍງານນີ້ ແລະ ໃຫ້ການຊວ່ຍເຫລືອດ້ານພັດທະນາ ແລະ ດຳເນີນໂຄງການປະກັນສັງຄົມຢູ່ໃນຫລາຍໆຂົງເຂດທີ່ເຄີຍເກີດເຫດການທີ່ບໍ່ລົງລອຍກັນທາງດ້ານສາດສະໜາ. ໃນການປະຕິບັດງານຮ່ວມກັບສູນກາງແນວລາວສ້າງຊາດ, ໂບດ LEC ໄດ້ຈັດການພົບປະກັນລະຫວ່າງ ພະນັກງານລັດທະບານ ແລະ ຊາວຄຣິດສະຕຽນໃນບາງໝູ່ບ້ານທີ່ມີຄວາມເຄັ່ງຕືງທາງສາດສະໜາ

ເຖີງວ່າຈະມີການຊັກຊ້າເປັນເວລາຫລາຍເດືອນໃນຕອນຕົ້ນ, ແຕ່ໃນຕົວຈີງແລ້ວ ການທີ່ລັດທະບານໄດ້ອະນຸຍາດໃຫ້ມີພິທີອຸປະສົມບົດໃຫ້ແກ່ພຣະ ແລະນັກບວດໃນຊ່ວງເດືອນ ມີຖຸນາ ປີ 2006 ກໍ່ແມ່ນການພັດກທະນາໃນທາງບວກນັ້ນເອງ

**ພາກ 3.   ບັນຫາທາງສັງຄົມ ແລະ ອາດສະຍາກຳ**

ບັນດາປະຊາຄົມຂອງສາດສະໜາຕ່າງໆ ແມ່ນຢູ່ຮ່ວມກັນຢ່າງສັນຕິ ແລະ ມີໄມຕີຈິດຕໍ່ກັນ, ສັງຄົມໃຫ້ຄວາມສຳຄັນແກ່ການມີສາຍພົວພັນແບບຖືກຕ້ອງປອງດອງ ແລະ ບັນດາຜູ້ຄົນທີ່ນັບຖືສາດສະໜາພຸດ ຊື່ງເປັນສາດສະໜາທີ່ຄອບງຳເພາະວ່າໃຫຍ່ກ່ວາໝູ່ນັ້ນ ໂດຍທົ່ວໄປແມ່ນໄດ້ຜ່ອນຜັນ ໃຫ້ແກ່ການປະຕິບັດສາດສະໜາອື່ນໆຢູ່. ບໍ່ໄດ້ມີການເຄື່ອນໄຫວ ລະຫວ່າງ ນິກາຍຕ່າງໆຂອງສາດສະໜາຄຣິສຕຽນຈົນເຖີງປະຈຸບັນ. ແຕ່ໂດຍທົ່ວໄປແລ້ວປະເພນີທາງວັດທະນະທຳຂອງລາວແມ່ນປູກນິໃສໃຫ້ມີຄວາມເຄົາລົບ ນັບຖື ໃນຄວາມແຕກຕ່າງດ້ານຄວາມເຊື່ອຖືທີ່ມີມາເປັນເວລາດົນນານ ແລະ ເປັນທີ່ຮູ້ຈັກກັນດີ . ເຖິງແມ່ນວ່າຄວາມເຄັ່ງຕືງລະຫວ່າງສາດສະໜາກໍເຄີຍເກີດຂື້ນຢູ່ພາຍໃນກຸ່ມຊົນເຜົ່າພື້ນເມືອງ ນ້ອຍ ແຕ່ກໍບໍ່ມີເລື້ອຍໆ ໂດຍສະເພາະ ກໍແມ່ນ

ສືບເນື່ອງມາຈາກການເຜີຍແຜ່ສາດສະໜາ ເພື່ອທັນປ່ຽນຄວາມເຊື່ອຖື ຫລື ສືບເນື່ອງມາຈາກຄວາມຂັດແຍ່ງກັນກ່ຽວກັບສິດທິ ໃນການນຳໃຊ້ ຊັບພະຍາກອນຂອງໝູ່ບ້ານ. ໃນຄວາມພະຍາຍາມຂອງບາງກຸ່ມໃນການຕັ້ງໂບດ LEC ເປັນອິດສະລະ ຫລື ຮ່ວມກັບສາຂາໂບດຈາກຕ່າງປະເທດນັ້ນກໍ່ເກີດໃຫ້ມີຄວາມເຄັ່ງຕືງຢູ່ໃນບັນດາປະຊາຄົມໂປເຕັກຕັນໄດ້ເຊັ່ນກັນ. ຍ້ອນການປະຕິບັດສາດສະໜາຂອງສະມາຊິກບາງຄົນ ຂອງກຸ່ມນັບຖືສາດສະໜານ້ອຍ ທີ່ບໍ່ຍອມປະກອບສ່ວນໃນພິທີທາງສາດສະໜາຂອງຊາວພຸດ ຫລື ພິທີຂອງພວກຖືຜີກໍ່ເກີດໃຫ້ມີຄວາມເຄັ່ງຕືງເກີດຂື້ນໄດ້.

ໃນເດືອນທັນວາ ປີ 2005, ນັກບວດ ນິກາຍ LEC ຊື່ ອາລູນ ວາຣາພົງ ໄດ້ຖືກຂ້າຕາຍຢູ່ແຂວງບໍລິຄຳໄຊ ຫລັງຈາກໃຫ້ຄຳເທດສະນາໃນພິທີຄຣິດສະມາດ. ໃນຊ່ວງຕອນທ້າຍຂອງການເຮັດລາຍງານນີ້ ໄດ້ມີລາຍງານວ່າບໍ່ມີຄວາມຄືບຫນ້າໃນການສືບສວນຂະດີຄາດຕະກຳດັ່ງກ່າວ.

## ພາກ 4. ນະໂຍບາຍຂອງລັດຖະບານສະຫະລັດ ອາເມຣິກາ

ເອກອັກຄະລັດຖະທູດຂອງສະຫະລັດ ໄດ້ກ່າວຖືເອົາການສະຫນັບສະຫນູນ ເສລີພາບທາງສາດສະໜາຄືນື່ງໃນບຸລິມະສິດຂອງທ່ານ ເມື່ອທ່ານມາເຖິງວຽງຈັນ. ທ່ານໄດ້ຍົກບັນຫາ ເສລີພາບທາງສາດສະໜາໄປປຶກສາຫາລື ໃນເວລາທ່ານເຂົ້າຢ້ຽມຄຳນັບ ຄະນະຜູ້ນຳລະດັບສູງສຸດຂອງລັດຖະບານລາວ. ທ່ານ ເອກອັກຄະລັດຖະທູດ ໄດ້ເວົ້າອອກຢ່າງກົງໄປກົງມາ ກ່ຽວກັບສະພາບຂອງເສລີພາບທາງສາດສະໜາກັບ ບັນດາເຈົ້າແຂວງໃນລະຫວ່າງການຢ້ຽມຢາມແຂວງຕ່າງໆ ເຈົ້າຫນ້າທີ່ຈາກສະຖານທູດກໍ່ໄດ້ປຶກສາຫາຫລືກັບພະນັກງານລັດທະບານລາວໃນຫລາຍໆລະດັບຈາກສູນກາງ ແລະທ້ອງຖິ່ນເຊັ່ນກັນ.

ສະຖານທູດສະຫະລັດຍັງສືບຕໍ່ເຈລະຈາກັບກົມສາດສະຫນາ ຂອງສູນກາງແນວລາວສ້າງຊາດ. ສະຖານທຸດ ໄດ້ໃຫ້ຂໍ້ມູນແກ່ສູນກາງແນວລາວສ້າງຊາດເຖິງກໍລະນີທີ່ມີການຈັບກຸມ ຫລືເຫດການຕ່າງໆ ແລະ ສູນກາງແນວລາວສ້າງຊາດກໍ່ໃຊ້ຂໍ້ມູນດັ່ງກ່າວເພື່ອເຂົ້າໄກ່ເກ່ຍກັບເຈົ້າຫນ້າທີ່ທອ້ງຖິ່ນ. ຄະນະຜູ້ແທນຂອງສະຖານທູດ ໄດ້ພົບປະສົນທະນາ ກັບບັນດາຜູ້ນຳສາດສະໜາທີ່ສຳຄັນທັງໝົດໃນປະເທດ ໃນໄລຍະທີ່ເຮັດລາຍງານສະບັບນີ້; ບັນດາເຈົ້າໜ້າທີ່ສະຖານທູດໄດ້ຊຸກຍູ້ຢ່າງຕັ້ງໃຈ ເພື່ອໃຫ້ມີເສລີພາບທາງສາດສະໜາ ເຖິງແມ່ນຈະມີສະພາບແວດລ້ອມ ທີ່ຖືກຈຳກັດຮັດແຄບ ໂດຍສິ່ມວນຊົນທີ່ເປັນຂອງລັດຖະບານ ແລະ ຢູ່ໄຕ້ການຄວບຄຸມຂອງລັດຖະບານກໍຕາມ.

ສະຖານທູດສະຫະລັດ ຊຸກຍູ້ສິ່ງເສີມຢ່າງແຮງກ້າ ໃຫ້ມີການ ຢ້ຽມຢາມປະເທດລາວຂອງຜູ້ແທນໃນລະດັບສູງ ເພື່ອໃຫ້ເປັນຕົວຊ່ວຍທີ່ມີປະສິດທິພາບທີ່ ສຸດເທົ່າທີ່ມີຢູ່ ເພື່ອຊຸກຍູ້ຝ່າຍລັດຖະບານລາວ ໃຫ້ມີການເຄົາລົບນັບຖື ເສລີພາບທາງສາດສະໜາຫລາຍຂື້ນ. ສະຖານທູດສະຫະລັດ

ຍັງໄດ້ບັນຈຸຫົວຂໍ້ ທີ່ກ່ຽວກັບເສລີພາບດ້ານສາສະໜາຢູ່ໃນປະເທດລາວ ນັ້ນເຂົ້າໃນ ເວພໄຊ້ ຂອງສະຖານທູດ.  ໃນຊ່ວງເດືອນມີນາ ປີ 2006 ພະນັກງານການທູດ ຈາກ ຫ້ອງການດ້ານວຽກງານ ເພື່ອເສລີພາບ ທາງສາດສະໜານາໆຊາດ ຂອງ ກະຊວງການຕ່າງປະເທດໄດ້ມາຢ້ຽມຢາມລາວ ແລະ ພົບປະກັບພະນັກງານ ສູນກາງແນວລາວສ້າງຊາດ ເພື່ອຊຸກຍູ້ຝ່າຍລັດຖະບານລາວ ໃຫ້ມີ ການເຄົາລົບ ນັບຖື ເສລີພາບທາງສາດສະໜາຫລາຍຂື້ນ ໃຫ້ມີການລົງທະບຽນໃຫ້ກຸ່ມນິກາຍ ເມໂທດິສທ ໃຫ້ ເປັນອົງການສາດສະໜາ, ອະນຸຍາດໃຫ້ໂບດຄາໂທລິກ ປະກອບພິທີ ອຸປະສົມບົດ ແລະປ່ອຍຕົວນັກໂທດທາງສາດສະໜາຫ້າຄົນ. ຍິ່ງກວ່ານັ້ນ ຮອງລັດທະມົນຕີ ກະຊວງການຕ່າງ ປະເທດ ທ່ານໂຣເບີດ ໂຊລິກ ແລະ ຮອງລັດທະມັນຕີຊ່ວຍຂອງກະຊວງການຕ່າງປະເທດ ຮັບພິດ ຊອບຝ່າຍ ອາຊີໃຕ້ ແລະ ປາຊີຟິກ ທ່ານ ອີຣິກ ໂຈນ ໄດ້ມາຢ້ຽມຢາມລາວໃນໄລຍະເຮັດບົດ ລາຍງານນີ້ ແລະ ຊຸກຍູ້ໃຫ້ມີການເຄົາລົບນັບຖື ເສລີພາບທາງສາດສະໜາຫລາຍຂື້ນ ໃນໄລຍະ ທີພວກທ່ານ ພົບປະກັບ ທ່ານ ນາຍຍົກ ລັດທະມົນຕີ ແລະ ທ່ານ ລັດທະມົນຕີ ກະຊວງ ການຕ່າງ ປະເທດ. ທ່ານ ໂຈນ ຍັງໄດ້ໂອ້ລົມກ່ຽວກັບບັນຫາເສລີພາບທາງສາສະໜາກັນທ່ານ ລັດທະມົນຕີ ກະຊວງການຕ່າງປະເທດໃນການຢ້ຽມຢາມຂອງທ່ານອີກເທື່ອໜື່ງໃນເດືອນ ເມສາ ປີ 2006.

ເຜີຍແຜ່ວັນທີ 15 ກັນຍາ, 2006